ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-08 ມີນາ 2025

ປີທີ 14 ສະບັບທີ 1008

ລາຍສັບປະດາ


## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນກຸມພາ



(ສພຊ) - ກອງປະຊຸມຄະນະປະຈຳສະພາແຫ່ງຊາດປະຈຳເດືອນກຸມພາ 2025 ໄດ້ດຳເນີນໃນວັນທີ 27-28 ກຸມພາ ຜ່ານມາ ໂດຍການເປັນປະທານຂອງທ່ານປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ; ມີບັນດາທ່ານຮອງປະທານຄະນະປະຈຳ ແລະກຳມະການຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຮອງປະທານກຳມາທິການແລະຮອງເລຂາທິການສະພາແຫ່ງຊາດ, ບັນດາທ່ານລັດຖະມົນຕີ ແລະ ຮອງລັດຖະມົນຕີກະຊວງ, ອົງການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ ເປັນຕົ້ນ: ບົດລາຍງານແຜນການ

ອ່ານຕໍ່ໜ້າ 6

## ຮອງປະທານສະພາແຫ່ງຊາດ ລົງເຄື່ອນໄຫວທີ່ແຂວງຫົວພັນ




(ສພຊ) - ໂດຍປະຕິບັດຕາມການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ, ໃນໄລຍະແຕ່ວັນທີ 2-6 ມີນາ 2025 ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ ພ້ອມດ້ວຍຄະນະທີ່ປະກອບດ້ວຍເລຂາທິການສະພາແຫ່ງຊາດ, ປະທານກຳມາທິການ ປກຊ-ປກສ, ຮອງປະທານກຳມາທິການການຕ່າງປະເທດ ແລະ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຂອງສະພາແຫ່ງຊາດ ໄດ້ເຄື່ອນໄຫວຢ້ຽມຢາມ ແລະ ເຮັດວຽກຢູ່ແຂວງຫົວພັນ.

ອ່ານຕໍ່ໜ້າ 6

## ຮຽບຮຽງເນື້ອໃນຮ່າງລັດຖະທຳມະນູນ ສະບັບປີ 2025




(ສພຊ) - ກອງປະຊຸມຮຽບຮຽງເນື້ອໃນການປັບປຸງຮ່າງລັດຖະທຳມະນູນ ສະບັບປີ 2025 ໄດ້ຈັດຂຶ້ນໃນວັນທີ 1-2 ມີນານີ້ ທີ່ເມືອງແກ້ວອຸດົມ ແຂວງວຽງຈັນ ໂດຍການເປັນປະທານຂອງທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ຮອງປະທານສະພາແຫ່ງຊາດ, ຮອງປະທານຜູ້ປະຈຳການ ແລະ ຫົວໜ້າກອງເລຂາຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ (ຄລຊ) ເຊິ່ງມີບັນດາທ່ານຄະນະກຳມະການ, ອະນຸກຳມະການຕ່າງໆ, ກອງເລຂາ ແລະ ພະນັກງານ ໃນ ຄລຊ ເຂົ້າຮ່ວມຢ່າງພ້ອມພຽງ.

ທ່ານ ສຈ. ປອ. ຈະເລີນ ເຍຍປາວເຮີ ໄດ້ລາຍງານໃຫ້ຮູ້ວ່າ: ໃນວັນທີ20 ກຸມພາ2025 ຄະນະກຳມະການລະດັບຊາດປັບປຸງລັດຖະທຳມະນູນ ໄດ້ລາຍງານຄວາມຄືບໜ້າການປັບປຸງ ແລະ ຜົນການທາບທາມຮ່າງລັດຖະທຳມະນູນ ສະບັບປີ 2025 ໃນ 7 ຈຸດທົ່ວປະເທດ ເພື່ອຂໍທິດຊີ້ນຳຈາກກອງປະຊຸມກົມການເມືອງຮ່ວມກັບຄະນະເລຂາທິການສູນກາງພັກ ສະໄໝວິສາມັນ; ຫຼັງຈາກນັ້ນ, ຄະນະກຳມະການລະດັບຊາດ ກໍໄດ້ປັບປຸງ

ອ່ານຕໍ່ໜ້າ 3

## ກວດກາເນື້ອໃນຮອບດ້ານ 2 ຮ່າງກົດໝາຍ



ອ່ານຕໍ່ໜ້າ 6




ສາຍາສັງຄົມ... (ໜ້າ 9)



Chad ປິດປະຕິທິນ... (ໜ້າ 11)




ສະໜາມຮົບ... (ໜ້າ 12)




ແນວຄິດຂອງປະທານ

### ໄກສອນ ພົມວິຫານ

ຜູ້ນຳທີ່ປະຊາຊົນເຄົາລົບຮັກ

1. ມໍລະດົກອັນລ້ຳຄ່າທາງດ້ານສະຕິປັນຍາທີ່ປະທານ ໄກສອນ ພົມວິຫານ ໄດ້ຝາກໄວ້ໃຫ້ຄົນລຸ້ນໃໝ່:

ຖ້າບໍ່ນຳເອົາການສຶກສາໄປກ່ອນກ້າວໜຶ່ງຄືດັ່ງໄດ້ບົ່ງໄວ້ໃນແຜນນະໂຍບາຍຂອງພັກນັ້ນແລ້ວ ກໍຈະບໍ່ມີຂໍກະແຈເພື່ອໄຂຊ່ອງທາງໃຫ້ແກ່ຂະແໜງການຕ່າງໆ (ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 5)

2. ແນວຄິດຂອງປະທານ ໄກສອນ ພົມວິຫານ ຜູ້ນຳທີ່ປະຊາຊົນລາວເຄົາລົບຮັກ

ກຳລັງໝູນຂອງທຸກໆການປະຕິວັດ ແມ່ນປະຊາຊົນ, ແມ່ນຊາດ ແລະ ແມ່ນລັດ, ປະຊາຊົນປຽບເໝືອນດັ່ງນ້ຳ, ພັກ ແລະ ລັດ ປຽບເໝືອນດັ່ງເຮືອ, ຜູ້ທີ່ຈະຊູເຮືອ ຫຼື ເຮັດໃຫ້ເຮືອຂ້ວາມແມ່ນນ້ຳ. ສຸພາສິດລາວກ່າວວ່າ: "ໄມ້ລຳດຽວລ້ອມຮົ້ວບໍ່ໄຄວ່ ໄພ່ບໍ່ພ້ອມແປງບ້ານບໍ່ຮຸ່ງເຮືອງ" (ນິພົນເລືອກເຟັ້ນ ເຫຼັ້ມ 4, ໜ້າ 100).

ອ່ານຕໍ່ສະບັບໜ້າ




## ສສຊ, ສສນວ ເຄື່ອນໄຫວວຽກງານ ຢູ່ກອງບັນຊາການທະຫານ ນວ




(ສພຊ) - ວັນພຸດທີ 5 ມີນາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ນຳໂດຍທ່ານ ອານຸພາບ ຕຸນາລົມ ຄະນະເລຂາທິການສູນກາງພັກ, ເລຂາຄະນະພັກນະຄອນຫຼວງວຽງຈັນ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 1,

ອ່ານຕໍ່ໜ້າ 9

**ຊົມເຊີຍວັນແມ່ຍິງສາກົນ 8 ມີນາ ຄົບຮອບ 115 ປີ (8/3/1910 - 8/3/2025) ຢ່າງສຸດໃຈ!**

# ຄະນະປະຈຳສະພາແຫ່ງຊາດ ຕິດຕາມການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນນ້ຳເຫືອງ



(ສພຊ)-ແຫຼ່ງຂ່າວຈາກແຂວງໄຊຍະບູລີໃຫ້ຮູ້ວ່າ: ເມື່ອບໍ່ດົນມານີ້, ທ່ານ ປອ. ລີເບີ ລີບົວປາວ ກຳມະການສູນກາງພັກ, ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ ທັງເປັນ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ເຄື່ອນໄຫວຕິດຕາມກວດກາການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນນ້ຳເຫືອງ ຊາຍແດນລາວ-ໄທ ຢູ່ບ້ານຄອນຕາປູ່ ແລະ ບ້ານຈອມແກ້ວ (ເໜືອຂົວມິດຕະພາບນ້ຳເຫືອງ) ໂດຍການຕ້ອນຮັບຂອງທ່ານ ສົມສີ ຊາວພິລາ ຮອງເຈົ້າເມືອງໆແກ່ນທ້າວ ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ແລະ ຫ້ອງການທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນນ້ຳເຫືອງ ເມືອງແກ່ນທ້າວ ພວມກໍ່ສ້າງ 3 ຈຸດ ມີຄວາມຍາວ4,930 ກວ່າແມັດ ມູນຄ່າ 110 ຕື້ກວ່າກີບ ໃນນີ້, ການກໍ່ສ້າງຢູ່ຈຸດບ້ານຄອນຕາປູ່ ມີຄວາມຍາວ2,300ແມັດມູນຄ່າ49,6 ຕື້ກວ່າກີບ ໂດຍແມ່ນບໍລິສັດພອງເພັດກໍ່ສ້າງ-ຂົວທາງ ເປັນຜູ້ຮັບເໝົາ, ຈຸດບ້ານຈອມແກ້ວ (ເໜືອຂົວມິດຕະພາບນ້ຳເຫືອງ) ມີຄວາມຍາວ 2,042 ແມັດ ມູນຄ່າ 43,4 ຕື້ກວ່າກີບ ໂດຍແມ່ນບໍລິສັດSLK ກໍ່ສ້າງ-ຂົວທາງ ເປັນຜູ້ຮັບເໝົາ ແລະ ຈຸດບ້ານພອນ ມີຄວາມຍາວ 590 ແມັດ ມູນຄ່າ 17,3 ຕື້ກວ່າກີບ ໂດຍແມ່ນບໍລິສັດ ຈັນທະວົງ ກໍ່ສ້າງ-ຂົວທາງ ເປັນຜູ້ຮັບເໝົາ.

# ຕິດຕາມກວດກາ ແລະ ຊຸກຍູ້ການປະຕິບັດວຽກງານ ຂອງ 2 ບໍລິສັດ ແລະ ສູນບໍລິການເຕັກນິກກະສິກຳ



(ສພຊ) - ໃນໄລຍະວັນທີ 3, 4 ແລະ 6 ມີນາຜ່ານມາ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ (ສພຂ) ທັງເປັນປະທານຄະນະສະມາຊິກສະພາແຫ່ງຊາດ (ຄສຊ) ປະຈຳເຂດເລືອກຕັ້ງທີ 17, ທ່ານ ມະນີໂສ ຊາມຸນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ, ຮອງປະທານຄສຊປະຈຳເຂດເລືອກຕັ້ງທີ 17 ພ້ອມດ້ວຍສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ແລະ ຄະນະຕິດຕາມຈາກ ສພຂ, ຕາງໜ້າພະແນກກະສິກຳແລະປ່າໄມ້ແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂອງບໍລິສັດ ລາວທຽນຊີພັດທະນາອຸດສາຫະກຳມັນຕົ້ນ ຈຳກັດຜູ້ດຽວ ຕັ້ງຢູ່ບ້ານໜອງຫີນ ເມືອງສະໜາມໄຊ, ສູນບໍລິການເຕັກນິກກະສິກຳ ຕັ້ງຢູ່ບ້ານຣົມ ເມືອງສາມັກຄີໄຊ ແລະ ບໍລິສັດ ທາໂກ (THACO) ຕັ້ງຢູ່ບ້ານຫາດຊັນ ເມືອງໄຊເສດຖາ ຕາມລຳດັບ ໂດຍມີຜູ້ຕາງໜ້າຈາກ 3 ພາກສ່ວນດັ່ງກ່າວ ໃຫ້ການຕ້ອນຮັບ.

ທີ່ບໍລິສັດ ລາວທຽນຊີພັດທະນາອຸດສາຫະກຳມັນຕົ້ນ ຈຳກັດຜູ້ດຽວ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດການດຳເນີນໂຄງການໃນໄລຍະຜ່ານມາ, ໜ້າວຽກປັດຈຸບັນແລະທິດທາງແຜນການໃນຕໍ່ໜ້າພ້ອມທັງສົນທະນາແລກປ່ຽນບາງບັນຫາທີ່ມີຄວາມສົນໃຈ ໂດຍສະເພາະເລື່ອງທີ່ດິນ, ການມີສ່ວນຮ່ວມໃນການພັດທະນາຊຸມຊົນ ແລະ ສິ່ງແວດລ້ອມ ເພື່ອຊອກໃຫ້ໄດ້ບັນດາຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂ, ຮັບປະກັນໃຫ້ໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງຕາມຂັ້ນຕອນ,

ອ່ານຕໍ່ໜ້າ 8

# ສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 115 ປີ




(ສພຊ)-ເພື່ອທົບທວນຄືນປະຫວັດຄວາມເປັນມາຂອງວັນແມ່ຍິງສາກົນ ວັນທີ 8 ມີນາ ຄົບຮອບ 115 ປີ (8/3/1910-8/3/2025), ສູນກາງສະຫະພັນແມ່ຍິງລາວ ໄດ້ຮ່ວມກັບຫຼາຍພາກສ່ວນ ຈັດພິທີສະເຫຼີມສະຫຼອງວັນແມ່ຍິງສາກົນ ພາຍໃຕ້ຄຳຂວັນ "ສິດທິ, ຄວາມສະເໝີພາບ ແລະ ການສ້າງຄວາມເຂັ້ມແຂງ ເພື່ອແມ່ຍິງ ແລະ ເດັກຍິງທຸກຄົນ" ໃນວັນທີ 5 ມີນາຜ່ານມາ ທີ່ໂຮງແຮມ ຮໍລີເດ ອິນ; ໂດຍມີທ່ານ ນາງ ອາລີ ວົງໜໍ່ບຸນທຳ ກຳມະການສູນກາງພັກ, ປະທານຄະນະບໍລິຫານງານສູນກາງສະຫະພັນແມ່ຍິງລາວ, ຮອງປະທານ ຜູ້ປະຈຳການຄະນະກຳມະການລະດັບຊາດສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເດັກນ້ອຍ ພ້ອມດ້ວຍຄອບຄົວການນຳຂັ້ນສູງຂອງພັກ-ລັດ, ບັນດາພະນັກງານປະຕິວັດອາວຸໂສ, ອະດີດການນຳຂອງສະຫະພັນແມ່ຍິງລາວ, ບັນດາທ່ານຮອງປະທານສູນກາງສະຫະພັນແມ່ຍິງລາວ ແລະ ຄະນະບໍລິຫານງານສະຫະພັນແມ່ຍິງລາວ, ສະຫະພັນແມ່ຍິງກະຊວງ ແລະ ອົງການ ພ້ອມດ້ວຍຕາງໜ້າສະຫະພັນແມ່ຍິງຮາກຖານ, ໜ່ວຍອ້ອມຂ້າງນະຄອນຫຼວງວຽງຈັນ, ສະມາຄົມນັກທຸລະກິດແມ່ຍິງ, ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສປປລາວ ແລະ ແຂກຖືກເຊີນ ເຂົ້າຮ່ວມຢ່າງຫຼວງຫຼາຍ.

ທຸກໆປີ ແມ່ຍິງໃນທົ່ວໂລກ ກໍຄືສະຫະພັນແມ່ຍິງລາວ ໄດ້ພ້ອມກັນທວນຄືນປະຫວັດວັນແມ່ຍິງສາກົນດ້ວຍຫຼາຍກິດຈະກຳທີ່ມີເນື້ອໃນຄວາມໝາຍ ແລະບັນຍາກາດຟົດຟື້ນ; ສຳລັບປີນີ້ ການສະຫຼອງຈັດຂຶ້ນໃນປີທີ່ມີຄວາມໝາຍສຳຄັນຂອງພັກ, ຂອງຊາດ ເປັນປີສະເຫຼີມສະຫຼອງ 3 ວັນປະຫວັດສາດຄື: ວັນສ້າງຕັ້ງພັກປະຊາຊົນປະຕິວັດລາວ ຄົບຮອບ 70 ປີ, ວັນສະຖາປະນາ ສປປລາວ ຄົບຮອບ 50 ປີ ແລະ ວັນຄ້າຍວັນເກີດປະທານໄກສອນ ພົມວິຫານ ຄົບຮອບ 105 ປີ; ສະເພາະແມ່ຍິງລາວທົ່ວປະເທດ ກໍກະກຽມສະເຫຼີມສະຫຼອງວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 70 ປີ ເຊັ່ນກັນ.

ໃນພິທີ ໄດ້ທວນຄືນມູນເຊື້ອຄວາມເປັນມາຂອງວັນສຳຄັນດັ່ງກ່າວ. ພ້ອມນີ້ ກໍໄດ້ມີການສຳມະນາໃນຫຼາຍຫົວຂໍ້ທີ່ຕິດພັນກັບວຽກງານພັດທະນາ, ສົ່ງເສີມບົດບາດຍິງ-ຊາຍ, ສົ່ງເສີມຄວາມກ້າວໜ້າແກ່ແມ່ຍິງ ໂດຍສະເພາະຕິດພັນກັບ 12 ຂົງເຂດທີ່ເຄັ່ງຮ້ອນ ແລະ ໜ້າເປັນຫ່ວງທີ່ຖືກຮັບຮອງເອົາໃນກອງປະຊຸມແມ່ຍິງໂລກຄັ້ງທີ4 ເຊັ່ນ: ການທົບທວນຖະແຫຼງການ ແລະ ແຜນປະຕິບັດງານປັກກິ່ງ + 30 ຂອງ ສປປລາວ; ແມ່ຍິງໃນເວທີການເມືອງ; ແນະນຳຄວາມຮູ້ພື້ນຖານກ່ຽວກັບຄວາມຮຸນແຮງຕໍ່ແມ່ຍິງ; ການສຶກສາ, ການເຝິກອົບຮົມ ແລະ ການຮຽນຮູ້ຕະຫຼອດຊີວິດສຳລັບແມ່ຍິງ ແລະ ເດັກຍິງ; ການເຂົ້າເຖິງການເບິ່ງແຍງສຸຂະພາບທີ່ມີຄຸນນະພາບ ແລະລາຄາບໍ່ແພງລວມທັງສຸຂະພາບທາງເພດ; ສຸຂະພາບຈະເລີນພັນ ແລະ ສິດທິຈະເລີນພັນ; ການເຂົ້າເຖິງການເບິ່ງແຍງສຸຂະພາບທີ່ມີຄຸນນະພາບຂອງຜູ້ລອດຊີວິດຈາກຄວາມຮຸນແຮງ; ຜູ້ປະກອບການເພດຍິງ ແລະ ວິສາຫະກິດຂອງແມ່ຍິງ; ການພົວພັນຮ່ວມມືສອງຝ່າຍ ແລະ ຫຼາຍຝ່າຍ ກັບອົງການຈັດຕັ້ງສັນຕິພາບຂອງປະເທດເພື່ອນມິດ ແລະ ສະພາສັນຕິພາບໂລກ; ການປ້ອງກັນ, ການຫຼຸດຜ່ອນ ແລະ ການສ້າງຄວາມຢືດຢຸ່ນ ກ່ຽວກັບຄວາມສ່ຽງໄພພິບັດ.



# ແຈ້ງການ
## ຂອງຄະນະເລຂາທິການສະພາແຫ່ງຊາດ

ອີງຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງປີ 2015 ມາດຕາ 61 ກ່ຽວກັບການດຳເນີນກອງປະຊຸມສະໄໝວິສາມັນຂອງສະພາແຫ່ງຊາດ ແລະ ອີງຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການດຳເນີນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ສະບັບເລກທີ 65/ຄປຈ, ລົງວັນທີ 3 ມີນາ 2025.

ຄະນະເລຂາທິການສະພາແຫ່ງຊາດ ມີຄວາມຍິນດີ ແລະ ຂໍຖືເປັນກຽດແຈ້ງມາຍັງອົງການຈັດຕັ້ງພັກ, ລັດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຊາບວ່າ: ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ຈະຈັດຂຶ້ນຢ່າງເປັນທາງການ ລະຫວ່າງວັນທີ 17-20 ມີນາ 2025 ທີ່ຫໍປະຊຸມສະພາແຫ່ງຊາດ, ນະຄອນຫຼວງວຽງຈັນ.

ດັ່ງນັ້ນ, ຄະນະເລຂາທິການສະພາແຫ່ງຊາດ ຈຶ່ງຂໍແຈ້ງມາເພື່ອຊາບດ້ວຍ.

ຜູ້ແທນປະຊາຊົນ PHOUTHEN PASAXON

# ກບຜ ຕິດຕາມວຽກງານສາສະໜາຢູ່ກຸ່ມບ້ານຫ້ວຍຊາຍນ້ອຍ



(ສພຂ) - ວັນຈັນທີ 3 ມີນາຜ່ານມາ, ທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ (ກບຜ) ພ້ອມດ້ວຍຄະນະ ສົມທົບກັບສະພາປະຊາຊົນແຂວງບໍ່ແກ້ວ ໄດ້ເຄື່ອນໄຫວຊຸກຍູ້, ຕິດຕາມກວດກາວຽກງານສາສະໜາ ທີ່ຕິດພັນກັບວຽກງານພັດທະນາຊົນນະບົດ ຢູ່ກຸ່ມບ້ານຫ້ວຍຊາຍນ້ອຍ ເມືອງຫ້ວຍຊາຍ ໂດຍການຕ້ອນຮັບຈາກບັນດາຄະນະພັກຜູ້ຊີ້ນຳກຸ່ມບ້ານ, ເລຂາຄະນະພັກຮາກຖານ, ທີມງານກໍ່ສ້າງຮາກຖານການເມືອງ, ອົງການປົກຄອງບ້ານ ແລະ ປະຊາຊົນພາຍໃນກຸ່ມບ້ານຫ້ວຍຊາຍນ້ອຍ.

ຕາງໜ້າຄະນະພັກ ແລະ ອົງການປົກຄອງບ້ານ ໄດ້ລາຍງານໂດຍຫຍໍ້ໃຫ້ຮູ້ວ່າ: ບ້ານຫ້ວຍຊາຍນ້ອຍ ຂຶ້ນກັບກຸ່ມບ້ານຫ້ວຍຊາຍນ້ອຍ ມີ 450 ຄົວເຮືອນ 629 ຄອບຄົວ, ມີພົນລະເມືອງທັງໝົດ 1,083 ຄົນ ຍິງ 687 ຄົນ; ປະກອບມີເຜົ່າກຶມມຸ, ເຜົ່າມົ້ງ ແລະ ເຜົ່າອິວມ້ຽນ; ປະຊາຊົນສ່ວນໃຫຍ່ແມ່ນຖືອາຊີບປູກຝັງ-ລ້ຽງສັດເປັນຕົ້ນຕໍ, ຄ້າຂາຍ ແລະ ເຮັດການບໍລິການເປັນສຳຮອງ. ໄລຍະຜ່ານມາ, ຄະນະພັກ ແລະ ອົງການປົກຄອງບ້ານ ໄດ້ສົມທົບກັບຄະນະທີມງານກໍ່ສ້າງຮາກຖານການເມືອງ ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໂດຍຈັດຕັ້ງຜັນຂະຫຍາຍບັນດາມະຕິ, ຄຳສັ່ງ, ລະບຽບກົດໝາຍຕ່າງໆ ຂອງພັກ-ລັດ ໃຫ້ປະຊາຊົນໄດ້ຮັບຮູ້-ເຊື່ອມຊຶມຢ່າງປົກກະຕິ ຕິດພັນກັບການສ້າງແຜນວຽກປະຈຳເດືອນ, ແຜນການເຄື່ອນໄຫວປະຈຳອາທິດ ຕິດຕາມເກັບຂໍ້ມູນຂອງພົນລະເມືອງ, ຈຳນວນຄົນເຂົ້າ-ອອກບ້ານ ໄປຄຽງຄູ່ການຊີ້ນຳ-ນຳພາ ປກສ-ກອງຫຼອນບ້ານ ຈັດຕັ້ງການປ້ອງກັນເວນຍາມຕາມຂອບເຂດບ້ານຢ່າງຕັ້ງໜ້າ ເຮັດໃຫ້ບ້ານສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ພາຍໃນບ້ານມີຄວາມສະຫງົບ, ພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ. ນອກຈາກນີ້, ຍັງໄດ້ຮັບຟັງການສະເໜີບັນຫາຕ່າງໆຈາກປະຊາຊົນ ເປັນຕົ້ນ: ການເຄື່ອນໄຫວດ້ານສາສະໜາຈຳນວນໜຶ່ງ ຍັງບໍ່ທັນສອດຄ່ອງກັບລະບຽບກົດໝາຍ, ປັບປຸງລະບົບນ້ຳລິນຢູ່ບ້ານຫ້ວຍຊາຍນ້ອຍ ແລະ ບ້ານຄົກຫຼວງ, ແກ້ໄຂບັນຫາຂໍ້ຂັດແຍ້ງເຂດແດນລະຫວ່າງບ້ານດ່ານຖິ່ນກັບບ້ານຫ້ວຍຊາຍນ້ອຍ ໃຫ້ມີຄວາມຊັດເຈນ, ການຍົກຍ້າຍຂອງພົນລະເມືອງທີ່ບໍ່ຖືກຕ້ອງ, ຫ້ອງຮຽນອະນຸບານບໍ່ພຽງພໍກັບນັກຮຽນ ເຮັດໃຫ້ແອອັດ, ການຊົດເຊີຍຜົນກະທົບຈາກໄພພິບັດ, ແກ້ໄຂບັນຫາຢາເສບຕິດ ແລະ ຂີ້ລັກງັດແງະ.

ຫຼັງຈາກນັ້ນ, ບັນດາຄະນະພັກແລະຄະນະນຳຂອງເມືອງ ໄດ້ຜັດປ່ຽນກັນຂຶ້ນຊີ້ແຈງອະທິບາຍແນວທາງ, ຂັ້ນຕອນ, ວິທີການແກ້ໄຂບັນຫາຕ່າງໆຢ່າງຖືກຕ້ອງຕາມລະບຽບກົດໝາຍ ເພື່ອເຮັດໃຫ້ປະຊາຊົນໄດ້ຮັບຮູ້ເຂົ້າໃຈຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ຢ່າງເລິກເຊິ່ງ.

ໂອກາດນີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ໄດ້ໃຫ້ທິດຊີ້ນຳເນັ້ນໜັກຫຼາຍບັນຫາຄື: ໃຫ້ຄະນະນຳຂອງເມືອງ, ຄະນະພັກຮາກຖານ, ອົງການປົກຄອງບ້ານ ແລະ ຄະນະທີມງານກໍ່ສ້າງຮາກຖານການເມືອງຕ້ອງເພີ່ມທະວີວຽກງານສຶກສາອົບຮົມການເມືອງ-ນຳພາແນວຄິດ, ເຕົ້າໂຮມຄວາມສາມັກຄີປອງດອງປະຊາຊົນບັນດາເຜົ່າເປັນສຳຄັນ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເປັນເຈົ້າການແກ້ໄຂບັນຫາປາກົດການຫຍໍ້ທໍ້ໃຫ້ຫຼຸດໜ້ອຍຖອຍລົງ, ຕ້ານການເຄື່ອນໄຫວທາງສາສະໜາທີ່ບໍ່ຖືກຕ້ອງ; ຍົກສູງການຕິດຕາມກວດກາຄຸ້ມຄອງການເຄື່ອນຍ້າຍຂອງພົນລະເມືອງ, ການລັກລອບນຳເຂົ້າສິນຄ້າທີ່ບໍ່ຖືກຕ້ອງ; ສົ່ງເສີມການປູກ-ການລ້ຽງສັດແບບເປັນລະບົບຕໍ່ເນື່ອງ; ພ້ອມກັນປົກປັກຮັກສາຮີດຄອງປະເພນີ, ວັດທະນະທຳອັນດີງາມຂອງຊາດ ກໍຄືຂອງເຜົ່າ ໄວ້ໃຫ້ຄົງຢູ່ກັບຊາດລາວຕະຫຼອດໄປ.

## ຮຽບຮຽງ...

(ຕໍ່ຈາກໜ້າ 1)

ຮ່າງລັດຖະທຳມະນູນຕາມທິດຊີ້ນຳຂອງກອງປະຊຸມດັ່ງກ່າວ ແລະ ໃນວັນທີ 24 ກຸມພາຜ່ານມາ, ຄະນະກຳມະການລະດັບຊາດ ໄດ້ລາຍງານຂໍທິດຊີ້ນຳກ່ຽວກັບການປັບປຸງຮ່າງລັດຖະທຳມະນູນ ສະບັບປີ 2025 ຕໍ່ກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະໄໝວິສາມັນ ເຊິ່ງກອງປະຊຸມຄັ້ງນີ້ ໄດ້ມີບັນດາສະຫາຍກົມການເມືອງ, ຄະນະເລຂາທິການ ແລະ ກຳມະການສູນກາງພັກ ປະກອບຄວາມເຫັນທັງໝົດ 22 ສະຫາຍ, ຍິງ 2 ສະຫາຍ ກວມເອົາ ຄຳນຳ ແລະ 29 ມາດຕາ. ສະນັ້ນ, ເພື່ອເຮັດໃຫ້ກອງປະຊຸມຮຽບຮຽງຮ່າງລັດຖະທຳມະນູນ ສະບັບປີ 2025 ຄັ້ງນີ້ ໄດ້ຮັບໝາກຜົນດີ, ສະເໜີໃຫ້ບັນດາຜູ້ເຂົ້າຮ່ວມຈົ່ງລົງເລິກຄົ້ນຄວ້າ, ປະກອບຄຳເຫັນ ໂດຍອີງໃສ່ທິດຊີ້ນຳຂອງກອງປະຊຸມຄົບຄະນະບໍລິຫານງານສູນກາງພັກ ສະໄໝວິສາມັນ ເພື່ອເຮັດໃຫ້ຮ່າງລັດຖະທຳມະນູນ ສະບັບປີ 2025 ມີເນື້ອໃນຄົບຖ້ວນ, ຮັດກຸມ, ແທດເຖິງຕົວຈິງ ແລະ ສາມາດນຳເຂົ້າລາຍງານຕໍ່ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະດຳເນີນໃນທ້າຍເດືອນມີນານີ້ ພິຈາລະນາຮັບຮອງ ແລະ ປະກາດໃຊ້.

**(ນາງ ກຸກກິກ ບຸດດາໄຊ)**

# ສສຊ, ສສນວ ພົບປະຜູ້ມີສິດເລືອກຕັ້ງຢູ່ພະແນກຍຸຕິທຳ




(ສພຊ) - ວັນທີ 4 ມີນາຜ່ານມາ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 1 ແລະ ສະມາຊິກສະພາປະຊາຊົນນະຄອນຫຼວງວຽງຈັນ (ສສນວ) ນຳໂດຍທ່ານ ຮສ. ປອ. ວຽງວິໄລ ທ່ຽງຈັນໄຊ ຮອງປະທານກຳມາທິການຍຸຕິທຳ ໄດ້ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ຊຸດທີ II ທີ່ພະແນກຍຸຕິທຳນະຄອນຫຼວງວຽງຈັນ; ໂດຍການຕ້ອນຮັບຂອງທ່ານ ພູທອນ ແກ້ວດວງມະນີ ຫົວໜ້າພະແນກຍຸຕິທຳ ພ້ອມດ້ວຍຫົວໜ້າອົງການໄອຍະການປະຊາຊົນພາກກາງ, ຮັກສາການປະທານສານປະຊາຊົນພາກກາງ, ຫົວໜ້າອົງການໄອຍະການປະຊາຊົນ ນວ, ປະທານສານປະຊາຊົນ ນວ, ຫົວໜ້າກອງປະຕິບັດຄຳຕັດສິນຂອງສານປະຈຳ ນວ ພ້ອມດ້ວຍບັນດາຄະນະນຳ ແລະ ພະນັກງານຫຼັກແຫຼ່ງທີ່ກ່ຽວຂ້ອງເຂົ້າຮ່ວມຮັບຟັງ.

ການເຄື່ອນໄຫວພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ໃນຄັ້ງນີ້ ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີຂອງຜູ້ມີສິດເລືອກຕັ້ງ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ບັນດາບັນຫາພົ້ນເດັ່ນຕ່າງໆ ທີ່ຈະເປັນຂໍ້ມູນໃຫ້ແກ່ ສສຊ ແລະ ສສນວ ໄດ້ນຳໄປຄົ້ນຄວ້າພິຈາລະນາ, ປະກອບຄຳຄິດຄຳເຫັນ ເຂົ້າໃນການພິຈາລະນາບັນຫາສຳຄັນຕ່າງໆ ໃນກອງປະຊຸມສະໄໝສາມັນຂອງ ສພຊ ແລະ ສປນວ ຄັ້ງຕໍ່ໄປ.

**(ແສງຈັນ)**

# 3 ອົງການຈັດຕັ້ງມະຫາຊົນກະຊວງຍຸຕິທຳ ຢ້ຽມຊົມຫ້ອງມູນເຊື້ອສະພາແຫ່ງຊາດ



(ສພຊ) - ຕອນເຊົ້າວັນທີ 5 ມີນານີ້, ກົມສື່ມວນຊົນ ຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ນຳພາ 3 ອົງການຈັດຕັ້ງມະຫາຊົນຈາກກະຊວງຍຸຕິທຳ ຈຳນວນ 35 ສະຫາຍ ເຊິ່ງນຳໂດຍສະຫາຍ ບຸນທະວີ ອິນສົມດີ ຄະນະບໍລິຫານງານສະຫະພັນກຳມະບານກະຊວງຍຸຕິທຳ, ຮອງຫົວໜ້າກົມທະບຽນສານ ຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາຢ້ຽມຊົມຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງຮູບພາບ ແລະ ວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX); ພ້ອມນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ຂອງສະພາແຫ່ງຊາດ ເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຮັບຮູ້ເຂົ້າໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ອາລິນ ສຸພົມມະປະດິດ)**

# ຖອດຖອນບົດຮຽນການຈັດຕັ້ງປະຕິບັດບົດບັນທຶກຮ່ວມ




(ສພຂ) - ຕອນບ່າຍວັນທີ 5 ມີນານີ້ ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ(ສພຂ)ຫຼວງນໍ້າທາ, ຄະນະກຳມະການຍຸຕິທຳ ແລະ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ໄດ້ເປີດກອງປະຊຸມຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດບົດບັນທຶກຮ່ວມລະຫວ່າງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສກັບອົງການທີ່ກ່ຽວຂ້ອງຂັ້ນແຂວງ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ກິ່ງເພັດ ແກ້ວບົວພາ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນຂວງ ແລະ ທ່ານ ຈັນທະສຸລິນໝັ້ນປະດິດປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ມີບັນດາທ່ານສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 3, ສະມາຊິກສະພາປະຊາຊົນແຂວງ, ຫົວໜ້າ-ຮອງຫົວໜ້າຈາກ ສອງກອງບັນຊາການແຂວງ, ອົງການໄອຍະການແລະສານປະຊາຊົນແຂວງ, ພະແນກຍຸຕິທຳແຂວງ ແລະ ຂະແໜງການພາຍໃນ ສພຂ ເຂົ້າຮ່ວມ 23 ທ່ານ, ຍິງ 3 ທ່ານ.

ກອງປະຊຸມໄດ້ຜ່ານຮ່າງບົດສະຫຼຸບຖອດຖອນບົດຮຽນກ່ຽວກັບການຈັດຕັ້ງປະຕິບັດບົດບັນທຶກຮ່ວມໃນໄລຍະຜ່ານມາ (2022-2025) ເຊິ່ງສາມາດສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍຂອງແຂວງ ໄດ້ທັງໝົດ 9 ສະບັບ, ໃນນີ້ສ້າງໃໝ່ 6 ສະບັບ ແລະ ປັບປຸງ 3 ສະບັບ (ຍັງຄ້າງ 3 ສະບັບປັບປຸງ ); ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ພ້ອມກັນປະກອບຄຳຄິດຄຳເຫັນແລກປ່ຽນ, ຖອດຖອນບົດຮຽນເພື່ອຍົກສູງຂອດປະສານງານຮ່ວມໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ, ຮັບປະກັນການຈັດຕັ້ງປະຕິບັດບົດບັນທຶກຮ່ວມໃຫ້ມີປະສິດທິຜົນສູງກວ່າເກົ່າ.

**(ອາເມັງ ວິແຄລູ)**

# ຄະນະເລຂາທິການ ສພຂ ຄຳມ່ວນ ສະຫຼຸບວຽກງານປີ 2024




(ສພຂ) - ກອງປະຊຸມສະຫຼຸບວຽກງານປະຈຳປີ2024 ຂອງຄະນະເລຂາທິການສະພາປະຊາຊົນ (ສພຂ) ແຂວງຄຳມ່ວນ ໄດ້ຈັດຂຶ້ນໃນວັນທີ 6 ມີນາຜ່ານມາ ໂດຍການເປັນປະທານຂອງທ່ານ ສະເຫຼີມສັກ ແກ້ວຈັນທະລາ ເລຂາທິການສະພາປະຊາຊົນແຂວງ ແລະ ເຂົ້າຮ່ວມໂອ້ລົມຂອງທ່ານ ບຸນມີ ພິມມະສອນ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຄຳມ່ວນ, ມີບັນດາທ່ານຮອງປະທານສະພາປະຊາຊົນແຂວງ, ປະທານ/ຮອງປະທານຄະນະກຳມະການ, ຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງຕະຫຼອດຮອດພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມໄດ້ຮັບຟັງການຜ່ານຮ່າງບົດສະຫຼຸບການເຄື່ອນໄຫວວຽກງານຂອງຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ຊຸດທີ II ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ2025; ຈາກນັ້ນ, ຜູ້ເຂົ້າຮ່ວມໄດ້ປະກອບຄຳຄິດຄຳເຫັນໃສ່ຮ່າງບົດສະຫຼຸບຢ່າງເປັນເຈົ້າການເພື່ອເຮັດໃຫ້ເນື້ອໃນຄົບຖ້ວນສົມບູນ, ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງທັງເປັນບ່ອນອີງໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າໄດ້ຮັບຜົນດີຂຶ້ນຕາມລຳດັບ.

ທ່ານບຸນມີພິມມະສອນໄດ້ຕີລາຄາສູງ ແລະ ຍ້ອງຍໍຊົມເຊີຍຕໍ່ຄະນະເລຂາທິການສະພາປະຊາຊົນແຂວງຄຳມ່ວນ ທີ່ໄດ້ເປັນເຈົ້າການຕັ້ງໜ້າເຄື່ອນໄຫວວຽກງານຂອງຕົນໃນປີ 2024 ມີຜົນສຳເລັດຫຼາຍດ້ານເຊັ່ນ:ການເປັນເສນາທິການຮອບດ້ານທາງດ້ານເນື້ອໃນໃຫ້ແກ່ການດຳເນີນກອງປະຊຸມສະພາປະຊາຊົນແຂວງ, ກອງປະຊຸມຄະນະປະຈຳສະພາສະພາປະຊາຊົນແຂວງ, ກອງປະຊຸມຮ່ວມກັບອົງການປົກຄອງແຂວງ; ການປະຕິບັດ 3 ພາລະບົດບາດຂອງສະພາປະຊາຊົນແຂວງ. ທ່ານຍັງໄດ້ເນັ້ນໜັກໃຫ້ເອົາໃຈໃສ່ວຽກງານສຶກສາອົບຮົມການເມືອງ-ແນວຄິດເປັນປົກກະຕິແນໃສ່ເຮັດໃຫ້ພະນັກງານ, ສະມາຊິກພັກ ມີຄວາມອຸ່ນອຽນທຸ່ນທ່ຽງ, ມີຄຸນທາດການເມືອງທີ່ໜັກແໜ້ນ ແລະ ເພີ່ມທະວີຄວາມສາມາດໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ເປັນເສນາທິການຮອບດ້ານໃຫ້ແກ່ສະພາປະຊາຊົນແຂວງ, ຄະນະປະຈຳສະພາປະຊາຊົນແຂວງ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງແລະຄະນະສະມາຊິກສະພາປະຊາຊົນແຂວງໃຫ້ມີຜົນສຳເລັດ.

**(ເອື້ອ ມະໂນສິງ)**

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຢູ່ກອງພົນໃຫຍ່ 643




(ສພຊ) - ວັນທີ 26 ກຸມພາຜ່ານມາ, ທ່ານ ປອ. ຄຳແສນ ສີສະວົງ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 9 ພ້ອມດ້ວຍທ່ານ ສອນເພັດ ລາພະທອງ ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງເມືອງແປກ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ຊຸດທີ II ທີ່ກອງພົນໃຫຍ່ 643; ມີບັນດາຄະນະພັກ-ຄະນະບັນຊາກອງພົນໃຫຍ່, ພະແນກການ, ກອງພົນນ້ອຍ, ກອງຮ້ອຍເອກະລາດ ຕະຫຼອດຮອດພະນັກງານຫຼັກແຫຼ່ງທົ່ວກົມກອງ ເຂົ້າຮ່ວມ.

ທ່ານ ພັທ. ບຸນມີ ດວງມະນີຈັນ ເລຂາຄະນະພັກ, ຫົວໜ້າການເມືອງກອງພົນໃຫຍ່ 643 ໄດ້ລາຍງານໂດຍຫຍໍ້ສະພາບ ແລະ ຈຸດພິເສດຂອງກົມກອງໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານວິຊາສະເພາະຕົວຈິງ; ຈາກນັ້ນ, ສສຊ ແລະ ສສຂ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສພຂ ຊຽງຂວາງ ຊຸດທີ II. ພ້ອມນີ້, ຍັງໄດ້ປະກອບຄຳຄິດຄຳເຫັນ, ຕັ້ງຄຳຖາມເຈາະຈີ້ມສົນທະນາເຊິ່ງກັນແລະກັນຢ່າງກົງໄປກົງມາ ເຊິ່ງເປັນການແລກປ່ຽນບົດຮຽນ, ສະເໜີບັນຫາ ແລະ ຊອກຫາວິທີແກ້ໄຂຮ່ວມກັນ; ທັງນີ້, ກໍເພື່ອຮັບປະກັນໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະມາຊິກສະພາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໃນການໂຄສະນາເຜີຍແຜ່ປຸກລະດົມໃຫ້ບັນດາພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າ ເວົ້າລວມ, ເວົ້າສະເພາະກໍຄືພະນັກງານ-ນັກຮົບຢູ່ກອງພົນໃຫຍ່ 643 ໄດ້ເຊື່ອມຊຶມ ແລະ ເຂົ້າໃຈໃນການປະຕິບັດແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ມະຕິກອງປະຊຸມສະພາແຫ່ງຊາດ ແລະ ກອງປະຊຸມສະພາປະຊາຊົນແຂວງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ເຂົ້າຮ່ວມການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ.

**(ຄຳໝັ້ນ ຄົງວິໄລ ກອງພົນໃຫຍ່ 643)**

# ສ້າງຄວາມເຂັ້ມແຂງການຮ່າງນິຕິກຳ ແລະ ເອກະສານຮັບໃຊ້ກອງປະຊຸມ




(ສພຂ) - ວັນທີ 3 ມີນານີ້ ທີ່ສະໂມສອນເມືອງພະລານໄຊ ແຂວງສະຫວັນນະເຂດ, ສະພາປະຊາຊົນ (ສພຂ) ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ພະນັກງານ-ລັດຖະກອນຂອງຕົນ ໂດຍການເປັນປະທານຂອງທ່ານ ກົງແກ້ວ ມິວໍລະຈັກ ປະທານສະພາປະຊາຊົນແຂວງ ເຊິ່ງມີທ່ານເຈົ້າເມືອງໆພະລານໄຊ ພ້ອມດ້ວຍບັນດາທ່ານຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ແລະ ສສຂ ປະຈຳເຂດເລືອກຕັ້ງເມືອງພະລານໄຊ ເຂົ້າຮ່ວມ.

ກອງປະຊຸມເຝິກອົບຮົມຄັ້ງນີ້ແມ່ນກອງປະຊຸມວິຊາການທີ່ມີຄວາມໝາຍຄວາມສຳຄັນ ແລະ ຈຳເປັນຢ່າງພາ ວະວິໄສ ຕໍ່ພະນັກງານ-ລັດຖະກອນທີ່ເຮັດໜ້າທີ່ເສນາທິການໃຫ້ ສພຂ; ຈຸດປະສົງເພື່ອຍົກສູງຂີດຄວາມຮູ້, ຄວາມສາມາດໃຫ້ແກ່ສຳມະນາກອນ ແນໃສ່ເຮັດໃຫ້ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງພະນັກງານ-ລັດຖະກອນທີ່ເປັນເສນາທິການມີຄວາມຊຳນານງານແລະເປັນມືອາຊີບ; ການສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານ-ລັດຖະກອນ ເປັນການຮຽນຮູ້ເອົາບົດຮຽນ, ຫຼັກການອັນໃໝ່ໆ ຈາກວິທະຍາກອນຜູ້ທີ່ມີບົດຮຽນ, ປະສົບການຈາກສະພາແຫ່ງຊາດ ໃນການສິດສອນ ກໍຄືການລົງເລິກວຽກງານອັນສະເພາະຢ່າງຫຼາກຫຼາຍ ແລະ ເປັນໂອກາດອັນດີທີ່ຈະໄດ້ແລກປ່ຽນຄວາມເຫັນ, ຖອດຖອນບົດຮຽນແລະປະສົບການເຊິ່ງກັນແລະກັນ.

ຜູ້ເຂົ້າຮ່ວມໄດ້ຮັບຟັງການນຳສະເໜີ 3 ຫົວຂໍ້ຄື: ຄວາມຮູ້ພື້ນຖານກ່ຽວກັບການສັງລວມຄຳເຫັນໃຫ້ປະທານກອງປະຊຸມ; ການຮ່າງຄຳຖາມເຈາະຈີ້ມ, ບົດຄຳເຫັນຕ່າງໆ ແລະ ການຮ່າງບົດລາຍງານກອງປະຊຸມສະພາປະຊາຊົນແຂວງໃນແຕ່ລະຄັ້ງ; ບົດຮຽນຕົວຈິງໃນການກະກຽມກອງປະຊຸມຮອບດ້ານຂອງສະພາແຫ່ງຊາດ.

**(ນາງ ຄອນສະຫວັນ ເມກສະຫວັນ)**

# ມອບເຄື່ອງຊ່ວຍເຫຼືອໃຫ້ 3 ເມືອງພູດອຍ ແຂວງສາລະວັນ



(ສພຂ) - ທ້າຍເດືອນກຸມພາຜ່ານມາ, ທ່ານ ສີເຮັງ ທອນສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງສາລະວັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຮັດວຽກ ແລະ ມອບເຄື່ອງຊ່ວຍເຫຼືອ ໃຫ້ຄະນະສະມາຊິກສະພາປະຊາຊົນແຂວງ(ຄສຂ)ປະຈຳເຂດເລືອກຕັ້ງເມືອງສະໝ້ວຍ, ເມືອງຕະໂອ້ຍ ແລະເມືອງຕຸ້ມລານ;ເຄື່ອງທີ່ນຳໄປມອບໃນຄັ້ງນີ້ ມີເຄື່ອງອຸປະໂພກ, ບໍລິໂພກ, ອຸປະກອນກິລາ, ອຸປະກອນການຮຽນ ແລະ ລົດຖີບທີ່ໄດ້ຮັບຈາກໂຄງການຮັກລາວ ມູນນິທິຈີນເພື່ອການພັດທະນາ ຈຳນວນ 15 ຄັນ ລວມມູນຄ່າ 89.5 ລ້ານກີບ; ຕາງໜ້າຮັບໂດຍຫົວໜ້າ ຄສຂ ປະຈຳເຂດເລືອກຕັ້ງ 3 ເມືອງ ເຊິ່ງມີຄະນະນຳຂັ້ນເມືອງ, ຄູ-ອາຈານ ແລະ ນ້ອງນັກຮຽນ ເຂົ້າຮ່ວມເປັນສັກຂີພະຍານ.

ເຄື່ອງຈຳນວນດັ່ງກ່າວ, ຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ 3 ເມືອງ ຈະນຳໄປມອບຕໍ່ ໃຫ້ປະຊາຊົນຜູ້ທີ່ທຸກຍາກຂາດເຂີນ, ນ້ອງນັກຮຽນດີເດັ່ນທີ່ຍັງຂາດເຂີນດ້ອຍໂອກາດ ແລະ ໂຮງຮຽນແຫ່ງຕ່າງໆຢູ່ເຂດຫ່າງໄກສອກຫຼີກ.

**(ດີລຳພົນ ພົມມະຈັນ)**

# ສພຂ ສາລະວັນ ມອບໃບຍ້ອງຍໍ ແລະ ປະກາດການຈັດຕັ້ງ




(ສພຂ)-ຕອນບ່າຍວັນພຸດທີ 5 ມີນາຜ່ານມາ ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດພິທີມອບໃບຍ້ອງຍໍຂັ້ນແຂວງໃຫ້ບຸກຄົນທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ຕິດພັນກັບການປະກາດການບັນຈຸສັບຊ້ອນ, ຍົກຍ້າຍ ແລະ ແຕ່ງຕັ້ງຫົວໜ້າ-ຮອງຫົວໜ້າຂະແໜງພາຍໃນ ສພຂ ໂດຍການເປັນປະທານຂອງທ່ານ ສີເຮັງ ທອນສົມບັດ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີບັນດາທ່ານຄະນະປະຈຳ, ຮອງປະທານຄະນະກຳມະການ, ຄະນະເລຂາທິການ ແລະ ພະນັກງານພາຍໃນ ສພຂ ພ້ອມດ້ວຍຕາງໜ້າຈາກພະແນກການຂອງແຂວງ.

ໃນພິທີ ໄດ້ຮັບຟັງການຜ່ານເອກະສານຂໍ້ຕົກລົງຂອງທ່ານເຈົ້າແຂວງ ວ່າດ້ວຍອະນຸມັດການຍ້ອງຍໍຂັ້ນແຂວງໃຫ້ບຸກຄົນທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດວຽກງານປະຈຳປີ2024ພ້ອມທັງຈັດພິທີມອບໃບຍ້ອງຍໍໃຫ້ພະນັກງານ ຈຳນວນ 49 ທ່ານ, ຍິງ 24 ທ່ານ. ຈາກນັ້ນ, ໄດ້ຮັບຟັງການຜ່ານຂໍ້ຕົກລົງສະບັບເລກທີ 212/ຄລສຂ.ສວ ວ່າດ້ວຍການແບ່ງຄວາມຮັບຜິດຊອບຂອງຄະນະເລຂາທິການສະພາປະຊາຊົນແຂວງ; ຂໍ້ຕົກລົງສະບັບເລກທີ 195 /ຄລສຂ.ສວ ວ່າດ້ວຍການຍົກຍ້າຍບາງໜ້າວຽກໃຫ້ຖືກຕ້ອງສອດຄ່ອງກັບພາລະບົດບາດຂອງແຕ່ລະຂະແໜງການ ແລະ ຜ່ານຂໍ້ຕົກລົງຕື່ມອີກ 5 ສະບັບ ວ່າດ້ວຍການແຕ່ງຕັ້ງຫົວໜ້າ-ຮອງຫົວໜ້າຂະແໜງ ແລະ ຍົກຍ້າຍສັບຊ້ອນໝູນວຽນລັດຖະກອນວິຊາການເຂົ້າໃສ່ແຕ່ລະຂະແໜງການ.

ທ່ານ ສີເຮັງ ທອນສົມບັດໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານຂອງພະນັກງານທີ່ມີຜົນສຳເລັດໃນໜຶ່ງປີຜ່ານມາ ແລະຍັງໄດ້ໂອ້ລົມເພື່ອເປັນທິດທາງໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ ເພື່ອໃຫ້ມີຜົນສຳເລັດເປັນກ້າວໆ ທັງໃຫ້ເຫັນໄດ້ບັນດາໜ້າວຽກທີ່ຈະຕ້ອງໄດ້ພ້ອມກັນບຸກທະລຸ ແລະ ສຸມໃສ່ຈັດຕັ້ງປະຕິບັດໃຫ້ສຳເລັດໃນຕໍ່ໜ້າ. ທ່ານປະທານສະພາປະຊາຊົນແຂວງກ່າວວ່າ: ການບັນຈຸສັບຊ້ອນ, ຍົກຍ້າຍ ແລະ ແຕ່ງຕັ້ງໃນຄັ້ງນີ້ ເພື່ອປະກອບເຂົ້າໃນກົງຈັກການຈັດຕັ້ງໃຫ້ມີຄວາມແທດເໝາະກັບຄວາມຮູ້ຄວາມສາມາດຕົວຈິງຂອງພະນັກງານ ແລະເຮັດໃຫ້ວຽກງານມີທ່າຫັນປ່ຽນທີ່ດີຂຶ້ນ, ສອດຄ່ອງກັບການປະຕິບັດວຽກງານຕົວຈິງ; ເປັນວຽກງານປົກກະຕິຂອງລະບົບການບໍລິຫານທາງລັດຖະການເພື່ອຮັບປະກັນການຈັດຕັ້ງໃຫ້ມີການສືບຕໍ່ເຄື່ອນໄຫວ, ຮັບປະກັນວຽກງານວິຊາສະເພາະມີຄວາມຕໍ່ເນື່ອງ, ມີຄວາມໜັກແໜ້ນເຂັ້ມແຂງ ແລະ ມີບາດກ້າວບຸກທະລຸຢ່າງມີປະສິດທິພາບ ແລະປະສິດທິຜົນໃນໜ້າທີ່ການເມືອງແຕ່ລະໄລຍະ.

**(ດີລຳພົນ ພົມມະຈັນ)**



# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຢູ່ເມືອງມຸນລະປາໂມກ



(ສພຊ)-ວັນທີ26-28 ກຸມພາຜ່ານມາ, ທ່ານ ນາງ ບຸນສຸວັນ ໂພໄຊຊະນະສັກ ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດແຂດເລືອກຕັ້ງທີ15ແຂວງຈຳປາສັກ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີIX ຢູ່ບ້ານຫ້ວຍຊາຍ ກຸ່ມໜອງງາ ແລະ ກອງພັນທະຫານຮາບກອງພັນ 20 ກຸ່ມກະດັນ ເມືອງມຸນລະປາໂມກ ລວມມີ 3 ຈຸດ, 4 ບ້ານ, 1 ກອງພັນ, 1 ກອງຮ້ອຍ ແລະ 1 ສຳນັກງານ ຄື: ບ້ານຫ້ວຍຊາຍ, ບ້ານທ່າກັງ, ບ້ານຫີນລາດ, ບ້ານກ້ານເຫຼືອງ, ກອງພັນທະຫານຮາບກອງພັນ 20, ກອງຮ້ອຍຊາຍແດນ 525 ແລະ ສຳນັກງານເມືອງ; ໂດຍການຕ້ອນຮັບຂອງປະທານກຸ່ມທັງສອງກຸ່ມ, ຄະນະພັກ-ຄະນະບັນຊາ, ນາຍ ແລະ ພົນທະຫານ, ອຳນາດການປົກຄອງບ້ານ ຕະຫຼອດຮອດພໍ່ແມ່ປະຊາຊົນ.

ໃນເຄື່ອນໄຫວຄັ້ງນີ້, ໄດ້ຮັບຟັງການລາຍງານຈັດຕັ້ງປະຕິວັດວຽກງານຈາກຄະນະພັກ-ຄະນະບັນຊາກອງພັນທະຫານຮາບກອງພັນ 20 ແລະ ນາຍບ້ານໆຫ້ວຍຊາຍ; ຈາກນັ້ນ, ທ່ານ ສສຊ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ເຊິ່ງໄດ້ຮັບຮອງເອົາຫຼາຍບັນຫາທີ່ສຳຄັນ ເປັນຕົ້ນການສະເໜີດັດແກ້ແຜນງົບປະມານແຫ່ງລັດປະຈຳປີ2024, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດປະຈຳປີ 2024, ວຽກງານສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ, ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023, ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິກອງປະຊຸມສະພາແຫ່ງຊາດສະບັບເລກທີ 02/ສພຊ, ລົງວັນທີ 28 ມັງກອນ 2016, ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາແລະຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ, ການປະເມີນກົດໝາຍຂົງເຂດວັດທະນະທຳ-ສັງຄົມ ຈຳນວນ 4 ສະບັບ, ວິໄສທັດຮອດປີ2040 ແລະ ຍຸດທະສາດການຄຸ້ມຄອງ ແລະ ການພັດທະນາທີ່ດິນກະສິກຳ ຮອດປີ 2030. ພ້ອມນັ້ນ, ຍັງໄດ້ຮັບຟັງຄຳຄິດເຫັນ ແລະ ຄຳສະເໜີຂອງພໍ່ແມ່ປະຊາຊົນ ເພື່ອຈະນຳໄປພິຈາລະນາ ແລະ ສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງ ໃຫ້ໄດ້ຮັບການແກ້ໄຂໃນຕໍ່ໜ້າ.

**(ນາງ ໜູລີ່ ຊາພັກດີ)**





## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ກະກຽມກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX; ບົດລາຍງານຮ່າງແຜນວຽກຈຸດສຸມຂອງຄະນະປະຈໍາສະພາແຫ່ງຊາດປະຈໍາປີ 2025; ບົດລາຍງານການກະກຽມກອງປະຊຸມກໍາມາທິການວຽກງານສະມາຊິກລັດຖະສະພາຂອງສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ (APF) ເຊິ່ງຈະຈັດຂຶ້ນໃນລະຫວ່າງວັນທີ 12-14 ມີນາ 2025 ທີ່ນະຄອນຫຼວງວຽງຈັນ ສປປລາວ; ບົດລາຍງານການກະກຽມຈັດກອງປະຊຸມຮ່ວມລະຫວ່າງຄະນະປະຈໍາສະພາແຫ່ງຊາດ ແລະ ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ; ບົດລາຍງານແຜນການຂອງຄະນະປະຈໍາສະພາແຫ່ງຊາດກ່ຽວກັບການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ III; ບົດລາຍງານຄືນກ່ຽວກັບແຜນການຍ້ອງຍໍ ແລະ ການມອບຫຼຽນກາລະນີກ; ບົດລາຍງານກ່ຽວກັບບັນຫາທີ່ກ່ຽວຂ້ອງເຖິງຄວາມໝັ້ນຄົງຕາມມະຕິຂອງກອງປະຊຸມຄົບຄະນະກໍາມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບປະຈໍາປີ 2024; ໜັງສືສະເໜີຂອງລັດຖະບານ ສະບັບເລກທີ 12/ລບ, ລົງວັນທີ 5 ກຸມພາ 2025 ກ່ຽວກັບການຂໍຮັບຮອງ ແລະ ຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການພະລັງງານລົມເຈືອງເຊີນ ຢູ່ແຂວງບໍລິຄໍາໄຊ ຂອງບໍລິສັດພະລັງງານລົມ ເຈືອງເຊີນ ຈໍາກັດ; ໜັງສືສະເໜີຂອງລັດຖະບານສະບັບເລກທີ 13/ລບ, ລົງວັນທີ 5 ກຸມພາ 2025 ທີ່ສະເໜີຮັບຮອງ ແລະ ຍົກເວັ້ນການປະຕິບັດບາງມາດຕາຂອງກົດໝາຍທີ່ພົວພັນກັບໂຄງການໄຟຟ້າພະລັງງານລົມ ສະຫວັນ 1 ຢູ່ເມືອງພິນ ແຂວງສະຫວັນນະເຂດ ຂອງບໍລິສັດ ສະຫວັນ 1 ວິນພາວເວີ ຈໍາກັດຜູ້ດຽວ; ບົດລາຍງານຄືນການສ້າງຮ່າງດໍາລັດວ່າດ້ວຍນິຄົມອຸດສາຫະກໍາ ຕາມແຈ້ງການຂອງຄະນະເລຂາທິການສະພາແຫ່ງຊາດ ສະບັບເລກທີ 614/ຄລສ, ລົງວັນທີ 22 ພະຈິກ 2024; ບົດລາຍງານຂອງກະຊວງໂຍທາທິການ ແລະ ຂົນສົ່ງ ກ່ຽວກັບໂຄງການພັດທະນາລະບົບລົດເມດ່ວນທີ່ທັນສະໄໝ (Bus Rapid Transit - BRT) ໃນນະຄອນຫຼວງວຽງຈັນ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງອົງການກວດສອບແຫ່ງລັດ ສະບັບເລກທີ02/ຄຈຜ, ລົງວັນທີ 10/01/2025 ກ່ຽວກັບການສະເໜີອະນຸມັດໃຫ້ພະນັກງານອອກພັກການ-ຮັບອຸດໜູນບໍານານ ແລະ ແຕ່ງຕັ້ງປະທານອົງການກວດສອບປະຈໍາພາກ; ບົດລາຍງານຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານສະບັບເລກທີ 65/ລບ, ລົງວັນທີ02/08/2024 ກ່ຽວກັບການສະເໜີຂໍຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ ໃຫ້ແກ່ໂຮງງານນໍ້າມັນພືດ ແສງສະຫວ່າງ ຈໍາກັດຜູ້ດຽວ; ພິຈາລະນາການສະເໜີແຕ່ງຕັ້ງ, ຍົກຍ້າຍບຸກຄະລາກອນຂອງສານປະຊາຊົນ, ສານທະຫານ; ພິຈາລະນາວຽກງານຄໍາຮ້ອງຈໍານວນໜຶ່ງ.

**(ນາງ ອາລິນ ສຸພົມມະປະດິດ)**



## ຮອງປະທານ...

(ຕໍ່ຈາກໜ້າ 1)

ໃນໄລຍະເຮັດວຽກຢູ່ແຂວງຫົວພັນ, ທ່ານຮອງປະທານສະພາແຫ່ງຊາດ ແລະ ຄະນະ ໄດ້ພົບປະກັບທ່ານ ຄໍາແພງ ໄຊສົມແພງ ກໍາມະການສູນກາງພັກ, ເລຂາພັກແຂວງ, ເຈົ້າແຂວງຫົວພັນ ເຊິ່ງໄດ້ແຈ້ງຈຸດປະສົງຂອງການມາເຄື່ອນໄຫວໃນຄັ້ງນີ້; ຫຼັງຈາກນັ້ນ, ຄະນະໄດ້ພົບປະກັບທ່ານ ຄອນປະພັນ ເລືອງສີຈັນທອງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍການນໍາຂອງພະແນກການທີ່ກ່ຽວຂ້ອງຂອງແຂວງ.

ທ່ານເລຂາພັກແຂວງ, ເຈົ້າແຂວງ, ປະທານສະພາປະຊາຊົນແຂວງ ແລະ ພະແນກການຕ່າງໆ ໄດ້ລາຍງານສະພາບການພັດທະນາເສດຖະກິດ-ສັງຄົມຂອງແຂວງ, ການເຄື່ອນໄຫວທີ່ພົ້ນເດັ່ນໃນປີ 2024 ຜ່ານມາ ແລະ ທິດທາງປີ 2025 ໂດຍສະເພາະແມ່ນການດໍາເນີນກອງປະຊຸມໃຫຍ່ 3 ຂັ້ນ ໃນຂັ້ນເມືອງ; ການເຄື່ອນໄຫວຕາມ 3 ພາລະບົດບາດຂອງສະພາປະຊາຊົນແຂວງ; ການນໍາຂອງພະແນກແຜນການ ແລະ ການລົງທຶນ, ພະແນກການຕ່າງປະເທດ, ພະແນກແຮງງານ ແລະ ສະຫວັດດີການສັງຄົມ, ພະແນກອຸດສາຫະກໍາ ແລະ ການຄ້າ ແລະ ກອງບັນຊາການ ປກສ ແຂວງ ຕ່າງກໍໄດ້ລາຍງານສະພາບການເຄື່ອນໄຫວຂອງຕົນໃຫ້ຄະນະຊາບ ທັງຍົກໃຫ້ເຫັນດ້ານດີ, ຂໍ້ສະດວກ ພ້ອມຂໍ້ຫຍຸ້ງຍາກ ແລະ ຂໍ້ສະເໜີຈໍານວນໜຶ່ງ.

ໃນການພົບປະກັບການນໍາຂອງແຂວງ, ສະພາປະຊາຊົນແຂວງ ແລະ ພະແນກການຕ່າງໆ; ທ່ານຮອງປະທານສະພາແຫ່ງຊາດໄດ້ມີການໂອ້ລົມແລກປ່ຽນຄໍາຄິດເຫັນຈໍານວນໜຶ່ງ ໂດຍໄດ້ເນັ້ນບາງຈຸດຄື:

1. ເອົາໃຈໃສ່ໃນການຄຸ້ມຄອງການລົງທຶນຂອງຕ່າງປະເທດ ນັບທັງການນໍາໃຊ້ ODA ຫຼື ໂຄງການຂອງອົງການຈັດຕັ້ງສາກົນ ໄປຫາຊົນນະບົດ ໂດຍໃຫ້ມີການແບ່ງຂັ້ນຄຸ້ມຄອງຢ່າງຊັດເຈນ ແລະ ມີການປະສານງານລະຫວ່າງສູນກາງ ກັບ ທ້ອງຖິ່ນ ໂດຍສະເພາະອັນໃດແມ່ນສິດໃນການອະນຸຍາດຂອງແຂວງ ແລະ ອັນໃດເປັນສິດອະນຸມັດຂອງສູນກາງ ເພື່ອຫຼີກເວັ້ນບໍ່ໃຫ້ມີໂຄງການທີ່ສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ສິ່ງແວດລ້ອມແລະທໍາມະຊາດ, ມີການຈັບຈອງໂຄງການ, ການຕໍ່ອາຍຸສັນຍາໂຄງການຫຼາຍຄັ້ງ, ການຂາຍໂຄງການ; ນອກຈາກນີ້, ກໍຄວນເອົາໃຈໃສ່ກວດກາການຂຸ້ງນໍ້າໜັກລົດຂົນສົ່ງແຮ່ທາດຕາມທີ່ກໍານົດໄວ້ໃນຂໍ້ຕົກລົງສະບັບເລກທີ 9393/ຍທຂ, ລົງວັນທີ 13/4/2023.

2. ໃຫ້ຖືສໍາຄັນການຄຸ້ມຄອງດ່ານສາກົນ, ດ່ານທ້ອງຖິ່ນ, ດ່ານປະເພນີ ລວມທັງການຄຸ້ມຄອງການເຂົ້າ-ອອກເມືອງ, ການອອກອະນຸຍາດໃຫ້ສັນຊາດແກ່ຄົນຕ່າງປະເທດ ໂດຍຜ່ານການອະນຸຍາດຂອງລັດຖະບານ, ຄວນຊອກວິທີແກ້ໄຂການຂາດແຄນແຮງງານ, ຄວນມີການປະສານງານກັບຜູ້ປະກອບການໃນການເຝິກອົບຮົມວິຊາຊີບໃຫ້ແກ່ແຮງງານ, ຫຼຸດຈໍານວນການນໍາເຂົ້າແຮງງານຈາກຕ່າງປະເທດ ເຊິ່ງຕາມກົດໝາຍວ່າດ້ວຍແຮງງານແມ່ນອະນຸຍາດໃຫ້ມີແຮງງານຕ່າງປະເທດ 10% ແຕ່ໃນຕົວຈິງແມ່ນກົງກັນຂ້າມ; ເອົາໃຈໃສ່ການປະຕິບັດວາລະແຫ່ງຊາດວ່າດ້ວຍການຕ້ານຢາເສບຕິດເຊິ່ງຈະປະຕິບັດໝົດປີ 2025.

3. ການແລກປ່ຽນດ້ານການຄ້າລາວ-ຫວຽດນາມ ຄວນຊອກໃຫ້ເຫັນໄດ້ທ່າແຮງຕ່າງໆຂອງແຂວງ, ຂອງເມືອງໃນການຜະລິດເພື່ອສົ່ງອອກ ເປັນຕົ້ນ: ໝາກໄມ້, ຜະລິດຕະພັນກະສິກໍາ ເພື່ອເພີ່ມບໍລິມາດດ້ານການຄ້າສອງສົ້ນໃຫ້ເພີ່ມຂຶ້ນ ກ້າວໄປເຖິງເປົ້າໝາຍ 5 ຕື້ໂດລາສະຫະລັດ ຂອງ 2 ລັດຖະບານວາງໄວ້ໃນຕໍ່ໜ້າໃຫ້ໄດ້.

ນອກຈາກເຮັດວຽກນໍາການນໍາຂອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງແລ້ວ, ຄະນະຍັງໄດ້ໄປເຮັດວຽກແລະຢ້ຽມຢາມໂຄງການຊ່ວຍເຫຼືອລ້າຂອງແຂວງ (ໂຮງໝໍແຂວງ), ຢ້ຽມຢາມບັນດາດ່ານຂອງແຂວງທີ່ເຊື່ອມຕໍ່ກັບ ສສ.ຫວຽດນາມ ເຊັ່ນ: ດ່ານສາກົນນໍ້າໂສຍ-ນາແມວ ທີ່ເມືອງໂສຍ, ດ່ານບ້ານດ່ານ-ຊຽງເຂືອງ ທີ່ເມືອງແອດ ແລະ ດ່ານປາຮ່າງ-ເມືອງສົບເບົາ; ຢ້ຽມຢາມພາກສະໜາມໂຄງການຂຸດຄົ້ນແຮ່ເຫຼັກ ຂອງກຸ່ມບໍລິສັດດວງຈະເລີນ ແລະ ບໍລິສັດຮວ່າງຟຸກລາງເຊີນ ທີ່ມີຂໍ້ຂັດແຍ້ງກັນໃນພື້ນທີ່ທັບຊ້ອນ ຢູ່ເມືອງວຽງໄຊ ແຂວງຫົວພັນ.

ໃນການລົງເຄື່ອນໄຫວຢ້ຽມຢາມຄັ້ງນີ້, ຄະນະຍັງໄດ້ໄປມອບອຸປະກອນການຮຽນໃຫ້ແກ່ນ້ອງນັກຮຽນ ທີ່ໂຮງຮຽນປະຖົມບ້ານແກ້ງພູນ ເມືອງວຽງໄຊ ແລະ ມອບເຄື່ອງຄອມພິວເຕີ ໃຫ້ແກ່ເມືອງແອດ ແຂວງຫົວພັນ.

**(ກົງທະນູຄໍາ ພິພັດເສລີ)**



## ກວດກາ...

(ຕໍ່ຈາກໜ້າ 1)

(ສພຊ)- ວັນທີ 4-6 ມີນານີ້ ທີ່ສະພາແຫ່ງຊາດ (ສພຊ) ໄດ້ມີກອງປະຊຸມກວດກາເນື້ອໃນຮອບດ້ານສອງຮ່າງກົດໝາຍສະບັບປັບປຸງຄື: ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແລະ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ໂດຍການເປັນປະທານຂອງຮອງປະທານສະພາແຫ່ງຊາດ ທ່ານ ຄໍາໃບ ດໍາລັດ ແລະ ທ່ານ ພົທ. ສຸວອນ ເລືອງບຸນມີ; ເຂົ້າຮ່ວມມີບັນດາທ່ານປະທານ ແລະ ຮອງປະທານກໍາມາທິການທີ່ກ່ຽວຂ້ອງຂອງ ສພຊ, ຮອງລັດຖະມົນຕີກະຊວງພາຍໃນ, ຮອງຫົວໜ້າຫ້ອງວ່າການສໍານັກງານປະທານປະເທດ, ຄະນະທີ່ປຶກສາກົດໝາຍຂອງຄະນະປະຈໍາສະພາແຫ່ງຊາດ ພ້ອມດ້ວຍຄະນະກົມ, ຄະນະພະແນກ, ພະນັກງານຈາກ ສພຊ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ທັງນີ້, ກໍເພື່ອຮັບປະກັນໃຫ້ເນື້ອໃນຂອງຮ່າງກົດໝາຍສອງສະບັບດັ່ງກ່າວ ທີ່ຈະນໍາເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ທີ່ຈະໄຂຂຶ້ນໃນກາງເດືອນມີນານີ້ ມີຄວາມຄົບຖ້ວນ, ຮັດກຸມ ແລະ ສອດຄ່ອງກັບການປັບປຸງລັດຖະທໍາມະນູນ ແລະ ການປັບປຸງລະບົບການປົກຄອງຂັ້ນທ້ອງຖິ່ນ ທັງຮັບປະກັນໃຫ້ວຽກງານພະນັກງານ-ລັດຖະກອນ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນຮູບປະທໍາຫຼາຍຂຶ້ນ.

ກອງປະຊຸມຄັ້ງນີ້ ເປັນການຄົ້ນຄວ້າ, ກວດກາເນື້ອໃນຮອບດ້ານຢ່າງລະອຽດຖີ່ຖ້ວນ ເຊິ່ງຜູ້ເຂົ້າຮ່ວມໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ, ປະກອບຄໍາເຫັນຢ່າງກົງໄປກົງມາ ແນໃສ່ເຮັດໃຫ້ເນື້ອໃນຮ່າງກົດໝາຍມີຄວາມຄົບຖ້ວນ, ຮັດກຸມ, ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທໍາມະນູນ, ກົດໝາຍອື່ນທີ່ປະກາດໃຊ້ແລ້ວ, ນິຕິກໍາອື່ນທີ່ກ່ຽວຂ້ອງ ແລະ ແທດເໝາະກັບສະພາບຕົວຈິງ; ພາຍຫຼັງສໍາເລັດກອງປະຊຸມ, ແມ່ນຈະໄດ້ລາຍງານຜົນການກວດກາເນື້ອໃນຮອບດ້ານຂອງຮ່າງກົດໝາຍຕໍ່ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ເພື່ອພິຈາລະນາ.

**(ສອນສັກ ວັນວິໄຊ)**

## ຮ່າງລັດຖະທຳມະນູນ...

(ຕໍ່ຈາກສະບັບກ່ອນ)

### ໝວດທີ IX
### ອົງການປົກຄອງທ້ອງຖິ່ນ

**ມາດຕາ 86 (ປັບປຸງ)**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແບ່ງການປົກຄອງທ້ອງຖິ່ນ ອອກເປັນສາມຂັ້ນ ຄື ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ສໍາລັບບ້ານ ແມ່ນ ການຈັດຕັ້ງຊຸມຊົນ ໂດຍມີການເລືອກຕັ້ງ ຕາມກົດໝາຍ.

**ມາດຕາ 87 (ປັບປຸງ)**

ອົງການປົກຄອງທ້ອງຖິ່ນ ແມ່ນ ອົງການບໍລິຫານລັດຂັ້ນທ້ອງຖິ່ນ, ມີພາລະບົດບາດຄຸ້ມຄອງບໍລິຫານລັດ ຢ່າງຮອບດ້ານ ແລະ ເປັນເອກະພາບໃນຂອບເຂດທ້ອງຖິ່ນ ຂອງຕົນ.

ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບຕໍ່ ລັດຖະບານ ແລະ ສະພາປະຊາຊົນທ້ອງຖິ່ນ.

ອົງການປົກຄອງທ້ອງຖິ່ນ ປະກອບດ້ວຍ ຄະນະກໍາມະການປົກຄອງ ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນຕາແສງ.

ຄະນະກໍາມະການປົກຄອງແຕ່ລະຂັ້ນປະກອບດ້ວຍປະທານ, ຮອງປະທານ ແລະ ກໍາມະການ.

ຄະນະກໍາມະການປົກຄອງແຕ່ລະຂັ້ນ ມີອາຍຸການເທົ່າກັບອາຍຸການຂອງສະພາປະຊາຊົນຂັ້ນທ້ອງຖິ່ນ.

**ມາດຕາ 88 (ປັບປຸງ)**

ອົງການປົກຄອງທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ນິຕິກໍາ, ມະຕິສະພາປະຊາຊົນທ້ອງຖິ່ນ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ;
2. ສ້າງແຜນຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂອງທ້ອງຖິ່ນ;
3. ຄຸ້ມຄອງບໍລິຫານທາງດ້ານ ການເມືອງ, ເສດຖະກິດ, ວັດທະນະທໍາ-ສັງຄົມ, ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ຊັບພະຍາກອນທໍາມະຊາດ, ສິ່ງແວດລ້ອມ ແລະ ອື່ນໆ;
4. ອອກນິຕິກໍາ ກ່ຽວກັບການຄຸ້ມຄອງເສດຖະກິດ, ວັດທະນະທໍາ-ສັງຄົມ ແລະ ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
5. ຕິດຕາມ ກວດກາການປະຕິບັດໜ້າທີ່ວຽກງານ ຂອງອົງການຈັດຕັ້ງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;
6. ຄຸ້ມຄອງພົນລະເມືອງ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດທີ່ດໍາລົງຊີວິດແລະເຄື່ອນໄຫວຢູ່ທ້ອງຖິ່ນຂອງຕົນ;
7. ຮັບ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີຂອງປະຊາຊົນ;
8. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ ຂອງລັດຖະບານ;
9. ສະຫຼຸບ, ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຮອບດ້ານ ຂອງທ້ອງຖິ່ນ ໃຫ້ຂັ້ນເທິງຖັດຕົນຢ່າງເປັນປົກກະຕິ;
10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

### ໝວດທີ X
### ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ

**ມາດຕາ 89 (ປັບປຸງ)**

ສານປະຊາຊົນ ແມ່ນ ອົງການຕຸລາການ; ມີແຕ່ສານປະຊາຊົນເທົ່ານັ້ນ ຈຶ່ງມີສິດອໍານາດພິຈາລະນາຕັດສີນ ແລະ ພິພາກສາ ຄະດີ ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສານປະຊາຊົນ ຕັດສີນຄະດີ ເປັນຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ.

ສານປະຊາຊົນ ມີໜ້າທີ່ ປົກປ້ອງ ຄວາມຍຸຕິທໍາ, ສິດທິບຸກຄົນ, ລະບອບປະຊາທິປະໄຕ ປະຊາຊົນ, ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາ ຂອງການຈັດຕັ້ງ ແລະ ບຸກຄົນ ຕາມກົດໝາຍ.

**ມາດຕາ 90**

ສານປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ ສານປະຊາຊົນສູງສຸດ, ສານປະຊາຊົນທ້ອງຖິ່ນ ແລະ ສານທະຫານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

ໃນກໍລະນີຈໍາເປັນ ອາດສ້າງຕັ້ງສານສະເພາະຕາມຂະແໜງການ ຕາມການຕົກລົງຂອງຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 91**

ສານປະຊາຊົນສູງສຸດ ແມ່ນ ອົງການພິພາກສາສູງສຸດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ສານປະຊາຊົນສູງສຸດ ກວດກາຄໍາຕັດສີນ ແລະ ຄໍາພິພາກສາຂອງສານປະຊາຊົນ ແລະ ສານທະຫານ.

**ມາດຕາ 92 (ປັບປຸງ)**

ປະທານສານປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕໍາແໜ່ງ ໂດຍສະພາແຫ່ງຊາດ ແລະ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ຮອງປະທານສານປະຊາຊົນສູງສຸດ ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ.

ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ປະທານ, ຮອງປະທານ ແລະ ຜູ້ພິພາກສາ ຂອງສານປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຄະນະປະຈໍາສະພາແຫ່ງຊາດ.

**ມາດຕາ 93 (ປັບປຸງ)**

ສານປະຊາຊົນ ພິຈາລະນາຕັດສີນເປັນໝູ່ຄະນະ ແລະ ລົງຄໍາຕັດສີນຖືເອົາຕາມສຽງສ່ວນຫຼາຍ, ເວັ້ນເສຍແຕ່ກໍລະນີຕັດສີນໂດຍຜູ້ພິພາກສາຜູ້ດຽວ.

ໃນເວລາພິຈາລະນາຕັດສີນ ຜູ້ພິພາກສາ ຕ້ອງເປັນເອກະລາດ ແລະ ປະຕິບັດຕາມກົດໝາຍ ເທົ່ານັ້ນ.

**ມາດຕາ 94**

ການໄຕ່ສວນຄະດີໃນທີ່ປະຊຸມສານ ຕ້ອງດໍາເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີ ທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 95 (ປັບປຸງ)**

ຄູ່ຄວາມ ມີສິດ ໂຕ້ແຍ່ງ, ໂຕ້ຖຽງ ໃນການດໍາເນີນຄະດີ.

ຜູ້ຖືກຫາ ມີສິດ ຮັບຊາບ, ແກ້ຂໍ້ກ່າວຫາ ຫຼື ຕໍ່ສູ້ຄະດີ ທີ່ຕົນຖືກກ່າວຫາດ້ວຍ ຕົນເອງ ຫຼື ຜູ້ປົກປ້ອງ ຫຼື ທະນາຍຄວາມ.

ທະນາຍຄວາມ ມີສິດຊ່ວຍເຫຼືອທາງດ້ານກົດໝາຍແກ່ ຄູ່ຄວາມ ແລະ ຜູ້ຖືກຫາ.

**ມາດຕາ 96 (ປັບປຸງ)**

ຜູ້ຕາງໜ້າອົງການຈັດຕັ້ງສັງຄົມ ແລະ ປະຊາຊົນ ມີສິດເຂົ້າຮ່ວມໃນການດໍາເນີນຄະດີຢູ່ສານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 97 (ປັບປຸງ)**

ຄໍາຕັດສີນຂອງສານປະຊາຊົນທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນທຸກອົງການຈັດຕັ້ງພັກ, ອົງການຈັດຕັ້ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການຈັດຕັ້ງສາກົນ ແລະ ພົນລະເມືອງລາວທຸກຄົນຕ້ອງເຄົາລົບ.

ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ມີສ່ວນກ່ຽວຂ້ອງ ຕ້ອງປະຕິບັດຢ່າງເຂັ້ມງວດ.

**ມາດຕາ 98 (ປັບປຸງ)**

ອົງການໄອຍະການປະຊາຊົນ ແມ່ນ ອົງການ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ແລະ ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍ ໃນການດໍາເນີນຄະດີຕາມຂະບວນຍຸຕິທໍາ.

**ມາດຕາ 99**

ອົງການໄອຍະການປະຊາຊົນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະກອບດ້ວຍ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນທ້ອງຖິ່ນ ແລະ ອົງການໄອຍະການທະຫານ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 100 (ປັບປຸງ)**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຊີ້ນໍາການເຄື່ອນໄຫວວຽກງານ ຂອງອົງການໄອຍະການປະຊາຊົນທຸກຂັ້ນ.

**ມາດຕາ 101 (ປັບປຸງ)**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກເລືອກຕັ້ງ ຫຼື ປົດຕໍາແໜ່ງ ໂດຍສະພາແຫ່ງຊາດ ແລະ ມີອາຍຸການເທົ່າກັບອາຍຸການຂອງສະພາແຫ່ງຊາດ.

ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ.

ຫົວໜ້າ, ຮອງຫົວໜ້າອົງການໄອຍະປະຊາຊົນ, ພະນັກງານໄອຍະການປະຊາຊົນ, ຜູ້ຊ່ວຍພະນັກງານ ໄອຍະການປະຊາຊົນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

**ມາດຕາ 102**

ໃນເວລາດໍາເນີນຄະດີນັ້ນ ພະນັກງານໄອຍະການຂອງອົງການໄອຍະການປະຊາຊົນ ມີແຕ່ປະຕິບັດຕາມກົດໝາຍ ແລະ ຄໍາສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເທົ່ານັ້ນ.

### ໝວດທີ XI
### ການກວດກາລັດ ແລະ ການກວດສອບແຫ່ງລັດ

**ມາດຕາ 103 (ໃໝ່)**

ການກວດກາລັດແມ່ນການເຄື່ອນໄຫວຂອງອົງການກວດກາລັດໃນການກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ພາລະບົດບາດ, ສິດ, ໜ້າທີ່, ຄວາມຮັບຜິດຊອບ ຂອງການຈັດຕັ້ງ ແລະ ພະນັກງານ ພ້ອມທັງສະເໜີວິທີການ ແລະ ມາດຕະການແກ້ໄຂ ຕາມກົດໝາຍ.

**ມາດຕາ 104 (ໃໝ່)**

ອົງການກວດກາລັດປະຕິບັດພາລະບົດບາດຕິດຕາມ, ກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ທີ່ເປັນການລະເມີດກົດໝາຍ.

ລະບົບການຈັດຕັ້ງ ຂອງອົງການກວດກາລັດ ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 105 (ໃໝ່)**

ປະທານອົງການກວດກາແຫ່ງລັດ ຖືກເລືອກຕັ້ງ ຫຼື ປົດຕໍາແໜ່ງໂດຍສະພາແຫ່ງຊາດ, ມີຄວາມຮັບຜິດຊອບຕໍ່ປະທານປະເທດ, ສະພາແຫ່ງຊາດ ກ່ຽວກັບວຽກງານ ກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ.

ຮອງປະທານອົງການກວດກາແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍປະທານປະເທດ.

ປະທານ, ຮອງປະທານອົງການກວດກາລັດແຕ່ລະຂັ້ນ ຖືກແຕ່ງຕັ້ງ, ຍົກຍ້າຍຫຼືປົດຕໍາແໜ່ງຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 106 (ໃໝ່)**

ອົງການກວດກາລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ແຜນງານ, ໂຄງການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງອົງການຈັດຕັ້ງທີ່ນໍາໃຊ້ຊັບສິນ ແລະ ງົບປະມານຂອງລັດ;
2. ກວດກາ ການນໍາໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານ ວິສະຫະກິດ ແລະ ບຸກຄົນ ທີ່ລະເມີດກົດໝາຍ;
3. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ແລະ ການປະຕິບັດຄໍາຕັດສີນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
4. ກວດກາ ໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ, ກວດກາຕາມຜົນການກວດສອບ ຕາມມະຕິຂອງ ສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ, ດໍາເນີນການຮັບແຈ້ງຊັບສິນ ແລະ ລາຍຮັບ;
5. ພິຈາລະນາ ແລະ ແກ້ໄຂຄໍາສະເໜີ; ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດໍາເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;
6. ສະເໜີ ມາດຕະການ ແລະ ວິທີການແກ້ໄຂຜົນຂອງການກວດກາ ໃຫ້ການຈັດຕັ້ງຂັ້ນເທິງ ເພື່ອພິຈາລະນາ ຕົກລົງ;
7. ລາຍງານການເຄື່ອນໄຫວ, ຜົນການກວດກາ, ຜົນການແກ້ໄຂການກວດກາ ຕໍ່ກອງປະຊຸມ ສະພາແຫ່ງຊາດ ຫຼື ສະພາປະຊາຊົນທ້ອງຖິ່ນ;
8. ນໍາໃຊ້ສິດແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 107 (ປັບປຸງ)**

ການກວດສອບແຫ່ງລັດ ແມ່ນ ການເຄື່ອນໄຫວຂອງອົງການກວດສອບແຫ່ງລັດໃນການກວດສອບການຄຸ້ມຄອງ ການນໍາໃຊ້ງົບປະມານ, ການເງິນ ແລະ ຊັບສິນຂອງລັດ.

**ມາດຕາ 108**

ການກວດສອບແຫ່ງລັດ ດໍາເນີນໂດຍອົງການກວດສອບແຫ່ງລັດ ຊຶ່ງມີອົງການກວດສອບ ປະຈໍາສູນກາງ ແລະ ອົງການ

ອ່ານຕໍ່ໜ້າ 8

## ຮ່າງລັດຖະທຳມະນູນ...

(ອ່ານຕໍ່ຈາກໜ້າ 7)

ກວດສອບປະຈຳພາກ.

ອົງການກວດສອບປະຈຳສູນກາງ ແລະ ອົງການກວດສອບປະຈຳພາກ ໄດ້ກຳນົດໄວ້ໃນກົດໝາຍສະເພາະ.

**ມາດຕາ 109 (ປັບປຸງ)**

ປະທານອົງການກວດສອບແຫ່ງລັດ ຖືກເລືອກຕັ້ງຫຼືປົດຕຳແໜ່ງ ໂດຍສະພາແຫ່ງຊາດ ຮັບຜິດຊອບໂດຍກົງຕໍ່ສະພາແຫ່ງຊາດ ແລະ ລາຍງານຕໍ່ປະທານປະເທດ, ນາຍົກລັດຖະມົນຕີ, ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບວຽກງານກວດສອບແຫ່ງລັດ.

ຮອງປະທານອົງການກວດສອບແຫ່ງລັດ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ.

**ມາດຕາ 110 (ປັບປຸງ)**

ອົງການກວດສອບແຫ່ງລັດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ດຳເນີນການກວດສອບ ເປັນເອກະລາດ ຕາມກົດໝາຍ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງ ການສ້າງ, ການດັດແກ້ ແຜນງົບປະມານແຫ່ງລັດ, ແຜນລາຍຮັບ, ແຜນລາຍຈ່າຍ, ແຜນການລົງທຶນ, ການຄາດຄະເນຜົນໄດ້ຮັບເລີ່ມແຕ່ທົ່ວທີ, ເອກະສານລາຍງານການເງິນ, ຄວາມສອດຄ່ອງທາງດ້ານກົດໝາຍ ແລະ ຜົນການຈັດ ຕັ້ງປະຕິບັດ;
2. ຄຸ້ມຄອງ, ຕິດຕາມ ກວດກາ ການດຳເນີນວຽກງານ ຂອງຕົນ ແລະ ອົງການກວດສອບປະຈຳພາກ ຕາມກົດໝາຍ;
3. ລາຍງານການເຄື່ອນໄຫວວຽກງານຂອງຕົນ ແລະ ຜົນການກວດສອບ ຕາມກົດໝາຍ;
4. ສະເໜີ ພາກສ່ວນທີ່ກ່ຽວຂ້ອງ ເພື່ອນຳໃຊ້ມາດຕະການຕໍ່ ເປົ້າໝາຍ ທີ່ລະເມີດກົດໝາຍ ຈາກຜົນການກວດສອບ;
5. ນຳໃຊ້ສິດແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ໝວດທີ XII
### ຄະນະກຳມະການເລືອກຕັ້ງ

**ມາດຕາ 111 (ປັບປຸງ)**

ຄະນະກຳມະການເລືອກຕັ້ງປະກອບດ້ວຍຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

ຄະນະກຳມະການເລືອກຕັ້ງລະດັບຊາດ ແມ່ນການຈັດຕັ້ງທີ່ຄະນະປະຈຳສະພາແຫ່ງຊາດ ຕົກລົງສ້າງຕັ້ງ ແລ້ວສະເໜີປະທານປະເທດອອກລັດຖະດຳລັດປະກາດເປັນທາງການ, ມີພາລະບົດບາດຊີ້ນຳການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນທ້ອງຖິ່ນ ແລະ ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ.

ຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ແມ່ນ ການຈັດຕັ້ງທີ່ ຄະນະປະຈຳສະພາປະຊາຊົນທ້ອງຖິ່ນ ເປັນຜູ້ຕົກລົງສ້າງຕັ້ງ ແລະ ປະກາດເປັນທາງການ, ມີພາລະບົດບາດ ຈັດຕັ້ງປະຕິບັດແຜນການຂອງຄະນະກຳມະການເລືອກຕັ້ງລະດັບຊາດ ໃນການເລືອກຕັ້ງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນທ້ອງຖິ່ນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 112 (ປັບປຸງ)**

ຄະນະກຳມະການເລືອກຕັ້ງ ລະດັບຊາດ ແລະ ລະດັບທ້ອງຖິ່ນ ປະກອບດ້ວຍ ປະທານ, ຮອງປະທານ ແລະ ກຳມະການ.

ອາຍຸການ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາແຫ່ງຊາດຊຸດນັ້ນ.

ອາຍຸການ ຂອງຄະນະກຳມະການເລືອກຕັ້ງລະດັບທ້ອງຖິ່ນ ຈະສິ້ນສຸດລົງ ພາຍຫຼັງສຳເລັດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນທ້ອງຖິ່ນຂັ້ນນັ້ນ.

ສຳລັບສິດ ແລະ ໜ້າທີ່ ຂອງຄະນະກຳມະການເລືອກຕັ້ງລະດັບຊາດ ແລະ ລະດັບທ້ອງຖິ່ນ ໄດ້ກຳນົດໄວ້ໃນກົດໝາຍ.

### ໝວດທີ XIII
### ພາສາ, ອັກສອນ, ເຄື່ອງໝາຍຊາດ, ທຸງຊາດ, ເພງຊາດ, ວັນຊາດ, ສະກຸນເງິນ ແລະ ນະຄອນຫຼວງ

**ມາດຕາ 113**

ພາສາ, ອັກສອນລາວ ເປັນພາສາ ແລະ ອັກສອນ ທີ່ໃຊ້ເປັນທາງການ.

**ມາດຕາ 114**

ເຄື່ອງໝາຍຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຮູບວົງມົນ ດ້ານລຸ່ມມີຮູບເຄິ່ງກົງຈັກເປັນແຂ້ວເຟືອງ ແລະ ໂບສີແດງຂຽນອັກສອນ "ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ" ສອງຂ້າງອ້ອມດ້ວຍຮວງເຂົ້າສຸກເປັນຮູບເຝືອງພະຈັນ ແລະ ໂບສີແດງຂຽນອັກສອນ "ສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ" ລະຫວ່າງກາງຂອງສອງປາຍຮວງເຂົ້າມີຮູບທາດຫຼວງ, ຢູ່ກາງຮູບວົງມົນມີທີ່ນທາງ, ທົ່ງນາ, ປ່າໄມ້ ແລະ ເຂື່ອນໄຟຟ້ານໍ້າຕົກ.

**ມາດຕາ 115**

ທຸງຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ທຸງພື້ນສີຟ້າ, ແຂບສີແດງ ແລະ ວົງເດືອນສີຂາວຢູ່ເຄິ່ງກາງ ຂອງທຸງຊາດ, ລວງກວ້າງຂອງທຸງເທົ່າກັບສອງສ່ວນສາມຂອງລວງຍາວ, ລວງກວ້າງຂອງແຂບສີແດງ ແຕ່ລະເບື້ອງເທົ່າກັບເຄິ່ງໜຶ່ງຂອງລວງກວ້າງແຂບສີຟ້າ ແລະ ວົງເດືອນສີຂາວ ກວ້າງເທົ່າກັບສີ່ສ່ວນຫ້າຂອງລວງກວ້າງແຂບສີຄາມ.

**ມາດຕາ 116**

ເພງຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ເພງທີ່ມີຊື່ວ່າ "ຊາດລາວ ".

**ມາດຕາ 117**

ວັນຊາດ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ວັນທີ 2 ທັນວາ 1975 ຊຶ່ງເປັນວັນສະຖາປະນາ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

**ມາດຕາ 118 (ປັບປຸງ)**

ສະກຸນເງິນ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນ ກີບ.

**ມາດຕາ 119 (ປັບປຸງ)**

ນະຄອນຫຼວງ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຕັ້ງຢູ່ນະຄອນວຽງຈັນ ຫຼື ແມ່ນ ວຽງຈັນ.

### ໝວດທີ XIV
### ບົດບັນຍັດສຸດທ້າຍ

**ມາດຕາ 120 (ປັບປຸງ)**

ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແມ່ນກົດໝາຍພື້ນຖານຂອງຊາດ.

ທຸກກົດໝາຍ ຕ້ອງໃຫ້ສອດຄ່ອງກັບລັດຖະທຳມະນູນ.

ລັດ ກຳນົດເອົາວັນທີ 15 ສິງຫາ 1991 ເປັນວັນລັດຖະທຳມະນູນແຫ່ງຊາດ.

**ມາດຕາ 121**

ມີແຕ່ກອງປະຊຸມສະພາແຫ່ງຊາດເທົ່ານັ້ນຈຶ່ງມີສິດປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິ ປະໄຕປະຊາຊົນລາວ.

ລັດຖະທຳມະນູນ ຈະຖືກຮັບຮອງໄດ້ກໍຕໍ່ເມື່ອມີສະມາຊິກສະພາແຫ່ງຊາດ ຫຼາຍກວ່າສອງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ ເປັນຜູ້ລົງຄະແນນສຽງເຫັນດີ.

**ມາດຕາ 122 (ປັບປຸງ)**

ລັດຖະທຳມະນູນສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ...... ພາຍຫຼັງປະທານປະເທດ ອອກລັດຖະດຳລັດ ປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະທຳມະນູນສະບັບນີ້ປ່ຽນແທນລັດຖະທຳມະນູນແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015.

**ປະທານສະພາແຫ່ງຊາດ**

## ຕິດຕາມ...

(ຕໍ່ຈາກໜ້າ 2)

ຕາມການອະນຸຍາດຂອງລັດຖະບານ ບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ສົມເຫດ, ສົມຜົນ.

ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ໄດ້ສະແດງຄວາມຊົມເຊີຍຕໍ່ບໍລິສັດ ທີ່ໄດ້ເອົາໃຈໃສ່ໃນການແກ້ໄຂບັນດາຜົນກະທົບຕ່າງໆ ໂດຍສະເພາະຕໍ່ຊີວິດການເປັນຢູ່ຂອງປະຊາຊົນ ແລະ ສິ່ງແວດລ້ອມ; ຄຽງຄູ່ກັນນີ້ກໍສະເໜີໃຫ້ບໍລິສັດເອົາໃຈໃສ່ຕິດຕາມຊ່ວຍເຫຼືອພໍ່ແມ່ປະຊາຊົນເຂດພັດທະນາໂຄງການ ໂດຍສົ່ງເສີມດ້ານການຜະລິດກະສິກຳ, ພັດທະນາປັບປຸງພື້ນຖານໂຄງລ່າງທີ່ເປັນທ່າແຮງຂອງທ້ອງຖິ່ນ ແລະ ອາຊີບອື່ນໆ ເຮັດໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີລາຍໄດ້ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນກວ່າເກົ່າ. ພ້ອມກັນນັ້ນ, ກໍຊ່ວຍເປັນທ່າແຮງໃນການພັດທະນາທ້ອງຖິ່ນໃຫ້ດີຂຶ້ນເປັນກ້າວໆ ຄຽງຄູ່ກັບການປົກປັກຮັກສາສິ່ງແວດລ້ອມ, ປ່າໄມ້ ແລະ ເຂດນໍ້າແຄມດິນ ພ້ອມທັງຟື້ນຟູປ່າແລະປູກປ່າທົດແທນຄືນ.



ທ່ານ ພູທອນ ປະທຸມມະແສງ ຫົວໜ້າສູນບໍລິການເຕັກນິກກະສິກຳ ໄດ້ລາຍງານການຈັດຕັ້ງປະຕິບັດວຽກງານໂດຍຫຍໍ້ໃຫ້ຊາບວ່າ: ສູນບໍລິການເຕັກນິກກະສິກຳ ແມ່ນອົງການຈັດຕັ້ງໜຶ່ງທີ່ສັງກັດໃນກົງຈັກຂອງພະແນກກະສິກຳ ແລະ ປ່າໄມ້ ເຮັດບົດບາດກ່ຽວກັບວຽກງານຄຸ້ມຄອງແລະຊຸກຍູ້ສົ່ງເສີມເຕັກນິກການຜະລິດ, ເຜີຍແຜ່ຂໍ້ມູນຂ່າວສານດ້ານກະສິກຳ ເຂົ້າໃນວຽກງານສາທິດ, ດ້ານແນວພັນພືດ, ພັນເຂົ້າ, ພັນສັດ ທີ່ໃຫ້ຜົນຜະລິດສູງ ແລະ ມີປະສິດທິພາບທາງດ້ານເສດຖະກິດ; ເຝິກອົບຮົມຍົກລະດັບຄວາມຮູ້ຄວາມສາມາດໃຫ້ແກ່ຊາວກະສິກອນ, ຜູ້ປະກອບການທົ່ວສັງຄົມ ໃນການນຳໃຊ້ເຕັກນິກກະເສດສຸມທີ່ທັນສະໄໝດ້ວຍເຄື່ອງມືກົນຈັກກະສິກຳ; ເອື້ອອຳນວຍໃຫ້ເຂົ້າເຖິງແນວພັນທີ່ດີ, ປັດໄຈການຜະລິດ ແລະ ຂໍ້ມູນຂ່າວສານດ້ານການຕະຫຼາດ.

ຄສຊ ປະຈຳເຂດເລືອກຕັ້ງ ໄດ້ມີຄຳເຫັນໃຫ້ເອົາໃຈໃສ່ໃນການໂຄສະນາດ້ານຂໍ້ມູນຂ່າວສານກ່ຽວກັບການນຳໃຊ້ແນວພັນ, ການຄົ້ນຄວ້າດ້ານເຕັກນິກ, ຊຸກຍູ້ດ້ານວິຊາການ, ປັບປຸງໂຄງລ່າງທີ່ຈຳເປັນໃນການຜະລິດ, ຊຸກຍູ້ສົ່ງເສີມການເອື້ອອຳນວຍ ແລະ ການປູກຝັງລ້ຽງສັດໃຫ້ຊາວກະສິກອນມີປະສິດທິພາບແລະປະສິດທິຜົນສູງ. ໃນວັນດຽວກັນ, ຄະນະຍັງໄດ້ລົງຕິດຕາມກວດກາຕົວຈິງຢູ່ສູນຜະລິດແນວພັນປາເຂດບ້ານຕໍ່ມະຍອດ ແລະ ບ້ານຫີນລາດເມືອງສະໜາມໄຊ, ໂຄງການຊົນລະປະທານເຊປຽນ-ເຊນໍ້ານ້ອຍທີ່ບ້ານລະຍາວໃຕ້ເມືອງສາມັກຄີໄຊ.

ທີ່ບໍລິສັດ ທາໂກ, ໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດໂຄງການໂດຍຫຍໍ້ວ່າ: ບໍລິສັດ ທາໂກ ເປັນບໍລິສັດລົງທຶນຂະໜາດໃຫຍ່ໃນຫຼາຍຂະແໜງກະສິກຳ, ປູກຢາງພາລາ, ປູກກ້ວຍ, ລ້ຽງງົວພັນຊີ້ນ; ປັດຈຸບັນ ມີແຮງງານ 5,300 ຄົນ ໃນນັ້ນລວມມີຜູ້ບໍລິຫານຊາວຫວຽດນາມ ແລະ ຜູ້ຊ່ຽວຊານຕ່າງປະເທດ 1,600 ຄົນ, ຜູ້ຈັດການ ແລະ ຄົນງານລາວ 3,700 ຄົນ, ເງິນເດືອນຂັ້ນຕໍ່າ 5 ລ້ານກີບ, ແຜນການຮັບສະໝັກແຮງງານຮອດທ້າຍປີ2025ປະມານ 12,500 ຄົນ. ພ້ອມກັນນີ້, ກໍໄດ້ສົນທະນາກ່ຽວກັບບາງບັນຫາ ໂດຍສະເພາະການປ້ອງກັນດ້ານສິ່ງແວດລ້ອມ, ແຜນຈັດສັນໃຫ້ປະຊາຊົນ, ອາຍຸສຳປະທານ, ເນື້ອທີ່ສຳປະທານທີ່ຍັງບໍ່ທັນຈະແຈ້ງ, ກົນໄກການຄຸ້ມຄອງແຮງງານແລະສະຫວັດດີການນະໂຍບາຍ ໂດຍຊອກໃຫ້ໄດ້ວິທີການ, ຂັ້ນຕອນ, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຂໍ້ຄົງຄ້າງທີ່ຈະຕ້ອງສືບຕໍ່ປັບປຸງແກ້ໄຂແລະເອົາໃຈໃສ່ຕິດຕາມຊ່ວຍເຫຼືອພໍ່ແມ່ປະຊາຊົນເຂດພັດທະນາໂຄງການ ໂດຍສົ່ງເສີມດ້ານການຜະລິດກະສິກຳທີ່ເປັນທ່າແຮງຂອງທ້ອງຖິ່ນ ແລະອາຊີບອື່ນໆເຮັດໃຫ້ປະຊາຊົນມີອາຊີບທີ່ໝັ້ນຄົງ, ມີການພັດທະນາ, ມີສ່ວນຮ່ວມເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງດີຂຶ້ນ ແລະ ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃຫ້ນັບມື້ມີການພັດທະນາແບບຍືນຍົງດີຂຶ້ນເປັນກ້າວໆ.

**(ວິນັດ ສີສຸລາດ)**




# ສາຍາສັງຄົມ: ທ້າວ ຄຳຜານ

**# ດົ້ນກົບເມກ**

ຈາກບົດຄວາມທີ່ສ່ອງແສງພຶດຕິກຳຂອງບຸກຄົນໃນສັງຄົມ ໂດຍສະເພາະແມ່ນໃນເວລາທີ່ການຈັດຕັ້ງພວມຢູ່ໃນໄລຍະປັບປຸງກົງຈັກ ສະແດງອອກຢູ່ໃນກອງປະຊຸມສາມຂັ້ນ... ທາງສຽງຊົມເຊີຍບົດຄວາມໃນຫົວຂໍ້: ທ້າວ ຄຳຄື ມີຫຼາຍຂຶ້ນ ເພາະມັນສາມາດສົມທຽບໄດ້ພຶດຕິກຳຂອງຄົນຈຳນວນໜຶ່ງ ທີ່ມີຈຸດປະສົງຢາກບິນເຂົ້າຢູ່ໃນກົງຈັກ... ແຕ່ພຶດຕິກຳຂອງຕົນພັດເປັນທ້າວ ຄຳຄື, ເມື່ອມີທ້າວ ຄຳຄື ທາງສຽງສັງຄົມພັດສະເໜີມາວ່າຢາກໃຫ້ຂຽນເຕືອນວ່າ ມັນຈະມີທ້າວ ຄຳຜານ ເລັດລອດເຂົ້າໄປອີກວ່າຊັ້ນ...!

ທ້າວ ຄຳຜານ ນີ້ ເປັນນາມສົມມຸດ ເດີທ່ານຜູ້ອ່ານ ເພາະປາກົດມີທາງສຽງສິ່ງມາວ່າ ຫຼັງຈາກມີຜູ້ຕິດຕາມອ່ານບົດນາງ ສຳແດງ ແລະ ທ້າວ ຄຳຄື ຜ່ານມາແລ້ວ ກໍມີເພື່ອນຜູ້ອ່ານຫວັງວ່າຍັງມີ ທ້າວ ຄຳຜານ ເຊິ່ງເປັນຕົວລະຄອນຫຼິ້ນບົດບາດຮ້າຍແຮງ ສ້າງຜົນເສຍແກ່ສ່ວນລວມຫຼວງຫຼາຍ ເພາະວ່າຕາມທາງສຽງຝາກມາບອກວ່າ ທ້າວ ຄຳຜານ ແມ່ນເນັ້ນເຖິງພຶດຕິກຳບຸກຄົນສໍ້ລາດບັງຫຼວງ ສ້າງຜົນຮ້າຍ ສູນເສຍຊັບຂອງລັດໄປຫຼາຍ ຕາມທີ່ໄດ້ອ່ານຂ່າວຈາກໜັງສືພິມ.

ຜູ້ອ່ານຄໍລຳພວກເຮົາປະຈຳ ຍັງຍໍ້າຕື່ມວ່າ ບໍ່ພຽງແຕ່ທ້າວ ຄຳຜານ ດອກທີ່ມີພຶດຕິກຳໂກງກິນ ແຕ່ຍັງມີນາງ ຄຳຜານ ປາກົດຢູ່ນຳອີກດ້ວຍ, ຜູ້ຂຽນໄດ້ອ່ານຂ່າວຈາກໜັງສືພິມລາວພັດທະນາ ເມື່ອວັນທີ 5 ກຸມພາ 2025 ທີ່ລົງຂ່າວກ່ຽວກັບກອງປະຊຸມວຽກງານກວດກາທົ່ວປະເທດ ລາຍ ງານໃຫ້ຮູ້ວ່າ: ປີ 2024 ຜ່ານມາ ໄດ້ສຳເລັດການສອບສວນຄະດີການສໍ້ລາດບັງຫຼວງ 4 ເລື່ອງ ມີຄວາມເສຍຫາຍ 115 ຕື້ກວ່າກີບ, 3 ລ້ານກວ່າບາດ, 25 ລ້ານກວ່າໂດລາ ແລະ ຫຼາຍກວ່າ 7 ລ້ານຢວນ... ມີເປົ້າໝາຍຜົວພັນທັງໝົດ 208 ຄົນ... ໝາຍວ່າມີທ້າວ ຫຼື ນາງ ຄຳຜານ 200 ກວ່າຄົນ; ຜູ້ຂຽນເຊື່ອວ່າເພື່ອນຜູ້ອ່ານຫຼາຍຄົນກໍໄດ້ຮັບຮູ້ຂ່າວຄືດັ່ງຜົນກອງປະຊຸມດັ່ງກ່າວໃນແຕ່ລະປີຫັ້ນນໍ!.

ເລື່ອງຂອງທ້າວ ຄຳຜານ ທີ່ປາກົດພຶດຕິກຳສໍ້ລາດບັງຫຼວງໃນກົນໄກວຽກງານຂອງພັກ-ລັດ ເຖິງແມ່ນວ່າອົງການກ່ຽວຂ້ອງພະຍາຍາມໃຊ້ລະບຽບກົດໝາຍສະກັດກັ້ນ, ບັງຄັບໃຊ້ລະບຽບກົດໝາຍ ແຕ່ພະຍາດດັ່ງກ່າວກໍຍັງເກີດຂຶ້ນເປັນປະຈຳໃນຫຼາຍໜ່ວຍງານທີ່ສ້າງຜົນເສຍແກ່ສ່ວນລວມ ເພາະວ່າທ້າວ ຄຳຜານ ເພິ່ນສະຫຼາດຄິດສະຫຼາດເວົ້າ ແລະ ສະຫຼາດວາງແຜນ ສ້າງວຽກສ້າງງົບປະມານ ວາງລະບົບກົນໄກບັນຊີຕົວເລກຢ່າງຄ່ອງແຄ້ວ, ບາງກໍລະນີກໍເຮັດເປັນຄະນະ ມີນາງ ຄຳຜານ ຮ່ວມຂະບວນການນຳ.

ທ້າວ ຄຳຜານ ຫຼື ນາງ ຄຳຜານ ຍັງປາກົດມີໃນຄອບຄົວ, ວົງຕະກູນ ບໍ່ເຮັດຫາອັນໃດ, ມີແຕ່ຜານຊັບຢ່າງດຽວ ກໍຈົນວ່າສົມກັບສາຍາສັງຄົມ ຕັ້ງໃຫ້ແທ້ໆນໍ! ພີ່ນ້ອງເອີ່ຍ!.






## ວິທີເຮັດວຽກ

**ພາກທີ 7**
**ບັນຫາພະນັກງານ**

**4. ວິທີປະພຶດຕໍ່ພະນັກງານ:**

ຂະບວນການກູ້ຊາດຟົດເຟືອດຂຶ້ນ ພາໃຫ້ຄົນສາມາດທີ່ຢູ່ນອກພັກສາມາດຟຸ່ງຟົ້ນຂຶ້ນມານັບມື້ນັບຫຼາຍ. ພວກເຮົາຈະໄປປະຖິ້ມຄົນສາມາດພວກນີ້ໃຫ້ຫ່າງໄກຈາກພວກເຮົາບໍ່ໄດ້, ພວກເຮົາຕ້ອງຈິງໃຈສາມັກຄີກັບເຂົາເຈົ້າ, ຊ່ວຍເຫຼືອເຊີດຊູເຂົາເຈົ້າ, ຮັກແພງສະໜິດສະໜົມໃກ້ຊິດເຂົາເຈົ້າ ເອົາຄວາມສາມາດຂອງເຂົາເຈົ້າມາໃຊ້ໃຫ້ເປັນຜົນເຂົ້າໃນການຕໍ່ສູ້ກູ້ຊາດຂອງເຮົາ.

ພວກເຮົາຕ້ອງຂູດເກົາເຜົາລ້າງພະຍາດອວດຕົວ, ພະຍາດໃຈແຄບ ແລະ ພະຍາດອູ້ມວຽກນັ້ນອອກໄປໃຫ້ໝົດກ້ຽງ. ສະຫຼຸບຄວາມວ່າກ່ຽວກັບພະນັກງານນັ້ນມີການເຮັດຢູ່ 5 ຢ່າງຄື:

ອ່ານຕໍ່ສະບັບໜ້າ...



## ສສຊ...

(ຕໍ່ຈາກໜ້າ 1)

ປະທານສະພາປະຊາຊົນນະຄອນຫຼວງວຽງຈັນ (ສປນວ) ພ້ອມດ້ວຍຄະນະຕິດຕາມ ໄດ້ເຄື່ອນໄຫວພົບປະ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II ຢູ່ກອງບັນຊາການທະຫານນະຄອນຫຼວງວຽງຈັນ ໂດຍການເຂົ້າຮ່ວມ ແລະ ຕ້ອນຮັບຂອງທ່ານ ພົຈວ. ໂສພາວັນ ທຳມະເທວາ ຫົວໜ້າການເມືອງກອງບັນຊາການທະຫານນະຄອນຫຼວງວຽງຈັນ; ມີຜູ້ຕາງໜ້າຈາກກອງບັນຊາການ ປກສ ນວ, ສະຫະພັນນັກຮົບເກົ່າ ນວ, ຄະນະກຳມະການ ປກຊ-ປກສ ນວ ພ້ອມດ້ວຍບັນດາຄະນະພັກກອງບັນຊາການ, ຄະນະຫ້ອງຕະຫຼອດຮອດນາຍທະຫານທົ່ວອົງການ 5 ຫ້ອງ ແລະ ກົມກອງອ້ອມຂ້າງເຂົ້າຮ່ວມຢ່າງພ້ອມພຽງ.

ໂອກາດດັ່ງກ່າວ, ບັນດາທ່ານ ສສຊ ແລະ ສສນວ ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດຂອງສອງກອງປະຊຸມດັ່ງກ່າວ ໂດຍຍົກໃຫ້ເຫັນຫຼາຍບັນຫາສຳຄັນຂອງວຽກງານດ້ານຕ່າງໆທີ່ພົ້ນເດັ່ນ ແລະ ໄດ້ມີການພິຈາລະນາ, ຮັບຮອງເອົາໃນກອງປະຊຸມດ້ວຍຄວາມເປັນເອກະພາບ ເຊິ່ງກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສຳຄັນຕ່າງໆຂອງຊາດເປັນຕົ້ນວຽກງານລັດຖະບານ ໄດ້ຮັບຮອງເອົາການສະເໜີດັດແກ້ແຜນງົບປະມານແຫ່ງລັດປະຈຳປີ 2024, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025, ແຜນການລົງທຶນຂອງລັດປະຈຳປີ 2025, ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023, ການຈັດຕັ້ງປະຕິບັດວຽກງານ 3 ສ້າງ ຕາມມະຕິກອງປະຊຸມສະພາແຫ່ງຊາດ, ການຈັດຕັ້ງປະຕິບັດຍຸດທະສາດການປະຕິຮູບລະບົບການສຶກສາ ແລະ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃນໄລຍະຜ່ານມາ, ການປະເມີນກົດໝາຍຂົງເຂດວັດທະນະທຳ-ສັງຄົມ ຈຳນວນ 4 ສະບັບ, ວິໄສທັດຮອດປີ 2040 ແລະ ຍຸດທະສາດການຄຸ້ມຄອງແລະການພັດທະນາທີ່ດິນກະສິກຳຮອດປີ 2030; ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງອົງການກວດກາແຫ່ງລັດ ປະຈຳປີ 2024 ແລະ ແຜນການປະຈຳປີ 2025, ບົດລາຍງານຜົນການກວດກາຕາມຜົນການກວດສອບປີ 2022, ການຈັດ ຕັ້ງປະຕິບັດການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ; ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານປະຈຳປີ 2024 ແລະ ແຜນການປີ 2025 ຂອງສານປະຊາຊົນສູງສຸດ, ການຈັດຕັ້ງປະຕິບັດວຽກງານຂອງໄອຍະການປະຊາຊົນສູງສຸດ ປະຈຳປີ 2024 ແລະ ແຜນການປີ 2025; ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ແຜນການປີ 2025 ຂອງສະພາແຫ່ງຊາດ; ຮັບຮອງເອົາກົດໝາຍຈຳນວນ 9 ສະບັບໃນນັ້ນ, ສ້າງໃໝ່ 2 ສະບັບ ແລະ ປັບປຸງ 7 ສະບັບ; ວຽກງານການປັບປຸງບຸກຄະລາກອນ ໄດ້ຍົກຍ້າຍ, ແຕ່ງຕັ້ງສະມາຊິກລັດຖະບານຈຳນວນ 4 ທ່ານ ເຊິ່ງໃນນັ້ນໄດ້ຍົກຍ້າຍທ່ານ ພົອ. ຈັນສະໝອນ ຈັນຍາລາດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນປະເທດ ໄປປະຈຳຢູ່ສຳນັກງານນາຍົກລັດຖະມົນຕີໃນຖານະເປັນຮອງນາຍົກລັດຖະມົນຕີເພື່ອຮັບຜິດຊອບວຽກງານຂອງລັດຖະບານ, ແຕ່ງຕັ້ງທ່ານ ພົທ. ຄຳລຽງອຸທະໄກສອນຮອງລັດຖະມົນຕີກະຊວງປ້ອງກັນປະເທດ ເປັນລັດຖະມົນຕີກະຊວງປ້ອງກັນປະເທດ, ຍົກຍ້າຍທ່ານ ສະເຫຼີມໄຊ ກົມມະສິດ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການຕ່າງປະເທດ ໄປປະຈຳຢູ່ສຳນັກງານນາຍົກລັດຖະມົນຕີໃນຖານະເປັນຮອງນາຍົກລັດຖະມົນຕີ ເພື່ອຮັບຜິດຊອບວຽກງານຂອງລັດຖະບານ ແລະ ແຕ່ງຕັ້ງທ່ານ ທອງສະຫວັນ ພົມວິຫານ ຫົວໜ້າຄະນະພົວພັນຕ່າງປະເທດສູນກາງພັກ ເປັນລັດຖະມົນຕີກະຊວງການຕ່າງປະເທດ.

ສຳລັບກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສປນວ ໄດ້ຮັບຮອງເອົາບົດລາຍງານຂອງອົງການປົກຄອງນະຄອນຫຼວງວຽງຈັນກ່ຽວກັບການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານປະຈຳປີ 2024 ແລະ ທິດທາງແຜນການປີ 2025, ແຜນການລົງທຶນຂອງລັດປະຈຳປີ 2025, ແຜນການຄາດຄະເນການນຳໃຊ້ເງິນເກີນແຜນງົບປະມານປະຈຳປີ 2024 ຕິດພັນກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດຢູ່ນະຄອນຫຼວງ; ຮັບຮອງເອົາການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກໃນນະຄອນຫຼວງປະຈຳປີ 2024 ແລະ ທິດທາງແຜນການປີ 2025; ຮັບຮອງເອົາວຽກງານອົງການກວດສອບປະຈຳພາກພາງ 1 ແລະ ວຽກງານອົງການກວດກາລັດ ນວ; ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງອົງການໄອຍະການປະຊາຊົນພາກພາງ, ອົງການໄອຍະການປະຊາຊົນ ນວ, ສານປະຊາຊົນພາກພາງ, ສານປະຊາຊົນ ນວ ແລະ ກອງປະຕິບັດຄຳຕັດສິນຂອງສານ ນວ; ຮັບຮອງເອົາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2024 ແລະ ທິດທາງແຜນການປະຈຳປີ 2025 ຂອງສະພາປະຊາຊົນນະຄອນຫຼວງວຽງຈັນ ຊຸດທີ II; ຮັບຮອງເອົານິຕິກຳສ້າງໃໝ່ ຈຳນວນ 2 ສະບັບ. ກອງປະຊຸມຍັງໄດ້ຮັບຟັງບົດລາຍງານການປະເມີນຜົນການຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍທີ່ສະພາປະຊາຊົນໄດ້ຮັບຮອງເອົາໃນໄລຍະຜ່ານມາ ຈຳນວນ 2 ສະບັບ; ການລາຍງານ, ຊີ້ແຈງບັນຫາສຳຄັນຕ່າງໆຂອງ ນວ ຈຳນວນ 14 ເນື້ອໃນ.

ທັງນີ້, ກໍເພື່ອເຮັດໃຫ້ນາຍທະຫານຢູ່ກອງບັນຊາການທະຫານ ນວ ໄດ້ຮັບຮູ້, ກຳແໜ້ນຢ່າງເລິກເຊິ່ງ ເນື້ອໃນເອກະສານກອງປະຊຸມສະໄໝສາມັນເທື່ອທີ 8 ຂອງ ສພຊ ຊຸດທີ IX ແລະ ສປນວ ຊຸດທີ II ເພື່ອພ້ອມກັນນຳໄປຈັດຕັ້ງຜັນຂະຫຍາຍເຂົ້າໃນໜ້າທີ່ວຽກງານຂອງຕົນໃຫ້ມີຜົນສຳເລັດຢ່າງຈົບງາມ.

**(ແສງດາລາ ໄຊຍະລາດ)**



ສຸກສະບາຍຫາຍໂຣຄ

## ປະໂຫຍດຂອງໝາກຂາມປ້ອມ

# ຄົດໂດຍ: ດອກໄມ້ປ່າ

ໝາກຂາມປ້ອມ ນອກຈາກຈະເປັນໝາກໄມ້ແລ້ວ ຍັງຖືກຈັດເປັນສະໝຸນໄພພື້ນບ້ານອີກຊະນິດໜຶ່ງ ທີ່ມີປະສິດທິພາບໃນການແກ້ໄອ, ມີວິຕາມິນຊີສູງ ແລະ ຍັງຊ່ວຍຕໍ່ຕ້ານອະນຸມູນອິດສະຫຼະອີກດ້ວຍ ເຊິ່ງປະໂຫຍດຂອງໝາກຂາມປ້ອມມີດັ່ງນີ້:

- ຊ່ວຍບັນເທົາອາການເຈັບຄໍ, ໄອແລະລະລາຍຂີ້ກະເທີ່
- ຊ່ວຍໃຫ້ຊຸ່ມຄໍ
- ບັນເທົາອາການຄັນຄໍ
- ເປັນສ່ວນປະກອບສຳຄັນໃນການຮັກສາ ແລະ ປ້ອງກັນໄຂ້ຫວັດໃຫຍ່.

ນອກຈາກນີ້, ສ່ວນຕ່າງໆຂອງຕົ້ນໝາກຂາມປ້ອມຍັງມີຄຸນປະໂຫຍດທີ່ສຳຄັນ ໂດຍສະເພາະແຮ່ທາດຫຼາຍຊະນິດທີ່ຈຳເປັນຕໍ່ຮ່າງກາຍ; ດັ່ງນັ້ນ, ຈຶ່ງຖືກນຳມາເປັນສ່ວນປະກອບສຳຄັນໃນການຮັກສາພະຍາດອື່ນໆອີກດ້ວຍ.






## ຄຳດີທີ່ແມ່ສອນ

# ຫຼານເຈົ້ານ້ອຍ

❋ ແຮກເກີດຄົນຫໍ່ຫຸ້ມ
ນອນນັ່ງຄົນຄອຍໂຊມ
ຍາມກິນມາດາປ້ອນ
ລູກຍິງແຫນຫ່ວງແຫ້
ແຫນແຫ່ອອນຊອນ
ເຈ່ຍອອງອອຍອູ້ມ
ນົມຫອມຫວານຍິ່ງ
ເກີນແກ້ວໜ່ວຍຕາ

❋ ສອງສາມປີຜ່ານພົ້ນ
ພາສາຄົນມາດາພຽນ
ເອົາແຕ່ຄວາມດີໄວ້
ບໍ່ເຄີຍສອນສິ່ງຊົ່ວ
ພວມຮ່ຳຮຽນຈາ
ສັ່ງສອນວອນເວົ້າ
ໃນສະໝອງແພງອ່ອນ
ຄຳປ້ອຍດ່າປະຈານ

❋ ພໍອາຍຸຍ່າງເຂົ້າ
ບຸດຕີມີຊຸມຊາຍ
ມາຜູກໄມຕຣີແໜ້ນ
ລືມແມ່ຄົນທີ່ລ້ຽງ
ໄວໜຸ່ມພໍດີ
ໜຸ່ມຄະນອງປອງເຂົ້າ
ເປັນແຟນແທນແຫ່
ຕົນເຈົ້າຜ່ານມາ

❋ ພາສາຄົນແມ່ໃຊ້
ກາຍເປັນພາສາເດຍລະສານ
ຄຳເວົ້າອັນຫວານຊຶ້ງ
ກັບເປັນຄຳຫຍາບຊ້າ
ສອນລູກວັນວານ
ຖິ່ນແດນດິນຖ້ຳ
ມາດາເຄີຍສອນສັ່ງ
ມາໂຕ້ຕອບຄືນ

❋ ຄິດຂຶ້ນມາແມ່ໄຫ້
ຄັນຈະປົງໃຈລືມ
ລູກພົມໃຈໃນໄສ້
ລຳບາກໃຈຊອກຊ້ຳ
ໃຈຂື່ນມືນງົງ
ເລີກລາໄລຖິ້ມ
ຂອງຕົນກໍແສນຍາກ
ລະກຳເສົ້າໝົ່ນໝອງ

❋ ແມ່ນີ້ລໍລູກຫຼ້າ
ເປັນທິດາຄົນເດີມ
ຖ້ອຍຄຳສຳນວນເວົ້າ
ໃຫ້ນາງພຽນໝັ່ນເວົ້າ
ນາງຕ່າວຄືນມາ
ດັ່ງຍາມຍັງນ້ອຍ
ຍາມເຍົາເຄີຍສອນສັ່ງ
ຢ່າໄລຖິ້ມປ່ອຍວາງ

❋ ໃຫ້ເຈົ້າຫາຊອກສ້າງ
ປະເພນີລາວເຮົາ
ລູກພົມໃຈສາວຫຼ້າ
ຢ່າວິກວຽນແວ່ເຂົ້າ
ເອົາຕົນໄປເກືອກກົ້ວ
ທຳແຕ່ຄວາມດີ
ຢ່າໄລລາຖິ້ມ
ຂວັນຊີວາຂອງແມ່
ເມົາມົ້ວສິ່ງບໍ່ດີ ແພງເອີຍ!

## ຄຸນປະໂຫຍດຂອງກາເຟດຳທີ່ຄົນຮັກສຸຂະພາບຕ້ອງຮູ້

# ຄົດໂດຍ: ທິວກະທິ





ເມື່ອເວົ້າເຖິງກາເຟ ຫຼາຍຄົນຄົງຈະຄິດເຖິງລົດຊາດທີ່ຫອມຫວານ ແລະ ເຂັ້ມຂຸ້ນ ແຕ່ທ່ານຮູ້ບໍວ່າ ມີກາເຟອີກປະເພດໜຶ່ງທີ່ທ່ານຕ້ອງໄດ້ລອງຊີມເບິ່ງຈັກຄັ້ງ ນັ້ນກໍຄືກາເຟດຳ ເຊິ່ງກາເຟດຳເປັນກາເຟທີ່ມີລົດຊາດທີ່ເຂັ້ມຂຸ້ນ ຈຶ່ງເຮັດໃຫ້ຫຼາຍຄົນເບິ່ງຂ້າມ ແຕ່ທ່ານຮູ້ບໍ່ວ່າກາເຟດຳທີ່ຂົມໆນັ້ນ ມີປະໂຫຍດຫຼາຍກວ່າທີ່ທ່ານຄິດ; ດັ່ງນັ້ນ, ມື້ນີ້ ຜູ້ຂຽນຈຶ່ງນຳເອົາຄຸນປະໂຫຍດຂອງກາເຟດຳນຳສະເໜີມາໃຫ້ທ່ານໄດ້ຮັບຮູ້ດັ່ງນີ້:

**1. ປ້ອງກັນເຊື້ອໄວຣັສຕັບອັກເສບ C**

ມີການວິໄຈພົບວ່າການດື່ມກາເຟດຳເປັນປະຈຳໃນແຕ່ລະມື້ນັ້ນສາມາດຫຼຸດຜ່ອນແລະປ້ອງກັນພະຍາດຕັບອັກເສບ C ໄດ້ ໂດຍການດື່ມກາເຟຢ່າງໜ້ອຍ 3 ຈອກຕໍ່ມື້ ແຕ່ກໍຂຶ້ນກັບສຸຂະພາບຮ່າງກາຍຕົນເອງ ເພາະບາງຄົນອາດຈະມີພະຍາດປະຈຳຕົວທີ່ບໍ່ສາມາດດື່ມກາເຟ ຫຼື ຄາເຟອີນໄດ້.

**2. ຊ່ວຍຫຼຸດນ້ຳໜັກ**

ຫຼາຍຄົນອາດຈະເຂົ້າໃຈວ່າການດື່ມກາເຟແມ່ນສາເຫດຂອງໂລກອ້ວນ ແຕ່ຄວາມຈິງແລ້ວແມ່ນກົງກັນຂ້າມເລີຍ ເພາະວ່າກາເຟດຳເປັນຕົວຊ່ວຍໃນການລະລາຍໄຂມັນໄດ້ເປັນຢ່າງດີ ແລະ ສາມາດທົດແທນພະລັງງານທີ່ເສຍໄປໄດ້; ການດື່ມກາເຟເປັນປະຈຳຫຼັງອາຫານ ຖືວ່າເປັນວິທີທີ່ດີທີ່ສຸດ ເພາະວ່າກາເຟຈະຊ່ວຍໃຫ້ໄຂມັນທີ່ທ່ານຮັບປະທານລົງໄປນັ້ນ ໄດ້ຮັບການສະລາຍໄປຢ່າງງ່າຍດາຍ ແຕ່ຕ້ອງເປັນກາເຟດຳທີ່ບໍ່ມີນ້ຳຕານ.

**3. ປ້ອງກັນພະຍາດຫືດ**

ກາເຟສາມາດປ້ອງກັນພະຍາດຫອບຫືດໄດ້ ເພາະພະຍາດຫອບຫືດເກີດຈາກເສັ້ນປະສາດສຳຮອງຖືກກະຕຸ້ນ ຈຶ່ງສະແດງອາການຫອບຫືດອອກມາ ແຕ່ເມື່ອດື່ມກາເຟດຳເປັນປະຈຳ ກາເຟດຳຈະຊ່ວຍຜ່ອນຄາຍຄວາມຕຶງຄຽດຂອງປະສາດສຳຮອງ ແລະ ບໍ່ກໍ່ໃຫ້ເກີດອາການຫອບຫືດໄດ້.

**4. ຫຼຸດຜ່ອນຄວາມສ່ຽງຂອງພະຍາດຫົວໃຈ**

ເນື່ອງຈາກກາເຟດຳມີວິຕາມິນ B ລວມຊະນິດໜຶ່ງເອີ້ນວ່າ ນິໂຄຕິນ (ຊະນິດດີ) ທີ່ຊ່ວຍຫຼຸດໄຂມັນໃນເລືອດ ແລະ ປ້ອງກັນບໍ່ໃຫ້ຫຼອດເລືອດກ້າມ ພ້ອມທັງຫຼຸດໄຂມັນໃນເລືອດໄດ້ຫຼາຍອີກດ້ວຍ ແຕ່ສຳລັບຄົນທີ່ເປັນພະຍາດຫົວໃຈແລ້ວ ຫ້າມດື່ມເດັດຂາດ.

**5. ປ້ອງກັນມະເຮັງ**

ໃນກາເຟດຳມີກົດອາຊິຕິກ ທີ່ຊ່ວຍຢຸດການຈະເລີນເຕີບໃຫຍ່ຂອງກ້ອນເນື້ອຮ້າຍ ແລະ ທຳລາຍຈຸລັງທີ່ຜິດປົກກະຕິ ທີ່ອາດຈະກາຍເປັນມະເຮັງໃນຕໍ່ໜ້າ ແຕ່ກາເຟດຳສາມາດປ້ອງກັນມະເຮັງໃນໄລຍະເລີ່ມຕົ້ນເທົ່ານັ້ນ ບໍ່ສາມາດໃຊ້ໃນການຮັກສາພະຍາດມະເຮັງໄດ້.

**6. ບັນເທົາອາການເຈັບຫົວ**

ການດື່ມກາເຟດຳເປັນປະຈຳສາມາດຊ່ວຍຫຼຸດຜ່ອນອາການເຈັບຫົວໄດ້ເພາະຄາເຟອີນຊ່ວຍຂະຫຍາຍເສັ້ນເລືອດ ເຮັດໃຫ້ການໄຫຼວຽນຂອງເລືອດແລະບັນເທົາອາການເຈັບໃຫ້ດີຂຶ້ນ; ພ້ອມນັ້ນ, ຍັງສາມາດຊ່ວຍບັນເທົາອາການເຈັບຫົວເນື່ອງຈາກອາການເມົາຄ້າງໄດ້ອີກດ້ວຍ ແຕ່ບໍ່ຄວນດື່ມຫຼາຍເກີນໄປ ເພາະວ່າມັນອາດຈະສົ່ງຜົນກະທົບດ້ານລົບແກ່ເຮົາ.

ແຕ່ເຖິງຢ່າງໃດກໍຕາມ, ກາເຟກໍຍັງມີຂໍ້ເສຍຢູ່ເຊັ່ນ:ເຮັດໃຫ້ນອນບໍ່ຫຼັບ, ຖ່າຍເບົາເລື້ອຍໆ, ສົ່ງຜົນກະທົບບໍ່ດີຕໍ່ລູກໃນທ້ອງສຳລັບແມ່ມານ, ກະເພາະເກີດການອັກເສບ ແລະ ອື່ນໆອີກຫຼາຍຢ່າງ; ສະນັ້ນ, ຄວນດື່ມກາເຟຢ່າງເໝາະສົມ ແລະ ເພີ່ມນ້ຳຕານ ຫຼື ນົມໃຫ້ໜ້ອຍທີ່ສຸດ ເພື່ອປ້ອງກັນພະຍາດເບົາຫວານ.

**ແຫຼ່ງຂໍ້ມູນຈາກ:**
**www.coffeefavour.com**

## ຊອບຍິ້ມ

# ແອ່ບຕຸ້ງ

### ເລື່ອງ: ໄດ້ຕາມຂໍ

ໃນເມືອງບາຣົກ, ເມື່ອເຖິງເວລາທີ່ຈະໄປເກີດໃໝ່ ຍົມມະທູດຈະໃຫ້ໂອກາດຂໍພອນໄດ້ 3 ຂໍ້; ມື້ນີ້, ແມ່ນຄິວຂອງທິດແຄັກ ລາວເລີຍຂໍກັບຍົມມະທູດວ່າ:

**ທິດແຄັກ:** ທ່ານໃຫ້ຂ້ອຍໄດ້ອີ່ຫຼີບໍ່
**ຍົມມະທູດ:** ແມ່ນ, ແຕ່ໄດ້ພຽງ 3 ຂໍ້
**ທິດແຄັກ:** ຄັນຊັ້ນ! ຂໍ້ທີໜຶ່ງ ຂໍໃຫ້ໄດ້ຢູ່ໃກ້ຄົນຜິວພັນສຸດຜ່ອງ, ຂໍ້ທີ 2 ໄດ້ຈັບບາຍດູດໄດ້ ແລະ ຂໍ້ທີ 3 ໃຫ້ສາມາດເຂົ້າໃກ້ຜູ້ຍິງໄດ້
**ຍົມມະທູດ:** ໄດ້ແທ້ແນ່ນອນ, ເຈົ້າຂໍພອນຄົບແລ້ວ ກໍໄປເກີດໄດ້ແລ້ວ
**ທິດແຄັກ:** ໄດ້ໆ, ແລ້ວຂ້ອຍໄປເກີດເປັນຫຍັງ?
**ຍົມມະທູດ:** ຍຸງ
!!!!!!

## ຄະຕິເຕືອນໃຈ

# ດອກຫຍ້າ

ຢ່າຊູໄລລາຖິ້ມ ພົງພັນພີ່ນ້ອງເກົ່າ
ຢ່າຊູລະເຜົ່າເຊື້ອ ໄປຍ້ອງຜູ້ອື່ນດີ

ລັດຖະສະພາຕ່າງປະເທດ

# Tajikistan ຈັດການເລືອກຕັ້ງສະພາຕ່ຳ



(Xinhua)-ການລົງຄະແນນສຽງໃນການເລືອກຕັ້ງສະພາຜູ້ແທນປະຊາຊົນ ແຫ່ງ ສາທາລະນະລັດ ຕັດຈິກິດສະຖານ ໄດ້ເລີ່ມຂຶ້ນໃນເວລາ 06:00 ໂມງ ແລະ ສິ້ນສຸດລົງໃນເວລາ 20:00 ໂມງ ຕາມເວລາທ້ອງຖິ່ນ ເມື່ອວັນອາທິດທີ 2 ມີນາ ຜ່ານມາ.

ຜູ້ສະໝັກຮັບເລືອກຕັ້ງທັງໝົດ 220 ຄົນ, ໃນນັ້ນມີຕົວແທນຈາກ6ພັກການເມືອງ ແລະ ຜູ້ສະໝັກເອກະລາດຈຳນວນໜຶ່ງ ແຂ່ງຂັນຍາດເອົາ 63 ທີ່ນັ່ງໃນສະພາຕ່ຳ ທີ່ມີອາຍຸການ 5ປີ, ພາຍໃຕ້ລະບົບການເລືອກຕັ້ງແບບປະສົມຄືແບບແບ່ງເຂດ ແລະ ແບບບັນຊີລາຍຊື່.

ປະທານາທິບໍດີ ເອໂມມາລີ ຣາມອນ (Emomali Rahmon) ຜູ້ນຳພັກປະຊາທິປະໄຕປະຊາຊົນ (PDP) ເຊິ່ງເປັນພັກລັດຖະບານ ໄປລົງຄະແນນສຽງໃນຕອນເຊົ້າວັນອາທິດຢູ່ໜ່ວຍປ່ອນບັດເລກທີ 15 ໃນນະຄອນຫຼວງດູຊານເບ (Dushanbe).

ຕາມຂໍ້ມູນທີ່ເຜີຍແຜ່ໂດຍຄະນະກຳມະການການເລືອກຕັ້ງສູນກາງ, ປັດຈຸບັນ ຕັດຈິກິດສະຖານ ມີຜູ້ລົງທະບຽນເລືອກຕັ້ງຫຼາຍກວ່າ 5.5 ລ້ານຄົນ, ມີ 3,513 ໜ່ວຍປ່ອນບັດໃນທົ່ວປະເທດ ພ້ອມດ້ວຍໜ່ວຍປ່ອນບັດຢູ່ຕ່າງປະເທດ 36 ແຫ່ງ ໃນ 28 ປະເທດ.

ຈາກທັງໝົດ 63 ທີ່ນັ່ງໃນສະພາຕ່ຳຈະມີການເລືອກຕັ້ງ 41 ທີ່ນັ່ງ ຈາກຜູ້ສະໝັກ 152 ຄົນ ໃນ 41 ເຂດເລືອກຕັ້ງ, ໃນຂະນະທີ່ຍັງເຫຼືອອີກ 22 ທີ່ນັ່ງ ຈະແຂ່ງຂັນໂດຍຜູ້ສະໝັກ 68 ຄົນ ທີ່ຖືກສະເໜີຊື່ໂດຍ 6 ພັກການເມືອງທີ່ເຂົ້າຮ່ວມການເລືອກຕັ້ງ.

ຜົນການເລືອກຕັ້ງສະແດງໃຫ້ເຫັນວ່າ, ພັກ PDP ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນ ໂດຍໄດ້ 47 ທີ່ນັ່ງ; ໃນຂະນະທີ່ ພັກກະສິກຳ ໄດ້ 7 ທີ່ນັ່ງ, ພັກປະຕິຮູບເສດຖະກິດ ໄດ້ 5 ທີ່ນັ່ງ, ພັກກອມມູນິດ ໄດ້ 2 ທີ່ນັ່ງ, ພັກສັງຄົມນິຍົມ ໄດ້ 1 ທີ່ນັ່ງ, ພັກປະຊາທິປະໄຕ ໄດ້ 1 ທີ່ນັ່ງ.

# ສະມາຊິກສະພາອີຣານ ປົດລັດຖະມົນຕີການເງິນ ຍ້ອນບັນຫາເສດຖະກິດ

(Xinhua)-ສຳນັກຂ່າວ IRNA ຂອງທາງການອີຣານ ລາຍງານເມື່ອວັນອາທິດທີ 2 ມີນາຜ່ານມາວ່າ ບັນດາສະມາຊິກລັດຖະສະພາອີຣານ ໄດ້ປົດທ່ານ ອັບໂດລນາເຊີ ເຮມມາຕິ (AbdolnaserHemmati)ລັດຖະມົນຕີກະຊວງເສດຖະກິດ ແລະ ການເງິນ ອອກຈາກຕຳແໜ່ງ ເນື່ອງຈາກບັນຫາເສດຖະກິດຂອງປະເທດ.



ຫຼັງຈາກຖືກຖອດຖອນໃນກອງປະຊຸມລັດຖະສະພາຢ່າງເປີດເຜີຍເນື່ອງຈາກບັນຫາຕ່າງໆ ເຊັ່ນ: ອັດຕາເງິນເຟີ້ສູງ ແລະ ການອ່ອນຄ່າຂອງສະກຸນເງິນປະຈຳຊາດ, ທ່ານ ເຮມມາຕິ ກໍບໍ່ໄດ້ຮັບຄະແນນສຽງໄວ້ວາງໃຈຈາກລັດຖະສະພາ, ໂດຍມີສະມາຊິກລັດຖະສະພາ 182 ໃນຈຳນວນ 273 ຄົນ ທີ່ເຂົ້າຮ່ວມກອງປະຊຸມ ລົງຄະແນນສຽງເຫັນດີໃຫ້ປົດເຂົາອອກຈາກຕຳແໜ່ງ.

IRNAລາຍງານວ່າກອງປະຊຸມຖອດຖອນຈັດຂຶ້ນໃນຕອນເຊົ້າ ເຊິ່ງທ່ານ ມາຊູດ ເປເຊຊຄຽນ ປະທານາທິບໍດີອີຣານ ໄດ້ກ່າວຄຳປາໄສປົກປ້ອງລັດຖະມົນຕີການເງິນຂອງຕົນ, ຕາມດ້ວຍວາລະລົງຄະແນນສຽງໃນຕອນບ່າຍ.

ທ່ານ ເປເຊຊຄຽນ ກ່າວວ່າ: ບັນຫາເສດຖະກິດຂອງປະເທດບໍ່ສາມາດກ່າວໂທດຄົນໃດຄົນໜຶ່ງໄດ້, ອີຣານ ຢູ່ໃນສົງຄາມເສດຖະກິດທີ່ "ຮ້າຍແຮງ ແລະ ເປັນຕາຢ້ານ" ຫຼາຍກວ່າສົງຄາມ 8 ປີ ຂອງປະເທດກັບອີຣັກໃນລະຫວ່າງປີ1980-88.

ທ່ານກ່າວຕື່ມວ່າ "ພວກເຮົາຍອມຮັບວ່າປະເທດມີບັນຫາ ແລະ ບໍ່ມີໃຜສາມາດຫຼີກລ່ຽງຄວາມຜິດພາດໄດ້,ລັດຖະບານໄດ້ໃຊ້ຄວາມພະຍາຍາມສຸດຂີດເພື່ອແກ້ໄຂບັນຫາຂອງປະຊາຊົນແລະສັງຄົມແລະເອົາຊະນະວິກິດການຂອງປະເທດ".

# Chad ປິດປະຕິທິນການເລືອກຕັ້ງ "ປະຫວັດສາດ" ຫຼັງຈາກປະກາດຜົນສຸດທ້າຍການເລືອກຕັ້ງສະພາສູງ



(Xinhua) - ສາທາລະນະລັດຊາດ ໄດ້ເປີດເຜີຍຜົນການເລືອກຕັ້ງສະພາສູງຄັ້ງທຳອິດຂອງປະເທດ ເຊິ່ງຖືເປັນການສິ້ນສຸດປະຕິທິນການເລືອກຕັ້ງທີ່ໄດ້ເລີ່ມຂຶ້ນໃນປີຜ່ານມາ.

"ການປະກາດຜົນການເລືອກຕັ້ງສະພາສູງຄັ້ງສຸດທ້າຍຖືເປັນຈຸດສູງສຸດຂອງບົດການເລືອກຕັ້ງຄັ້ງປະຫວັດສາດສຳລັບປະເທດຂອງພວກເຮົາ" ປະທານາທິບໍດີ ມະຫາມັດ ອິດຣິສ ເດບີ ອິດໂນ ກ່າວໃນສື່ສັງຄົມ ຫຼັງຈາກສະພາລັດຖະທຳມະນູນປະກາດຜົນສຸດທ້າຍຂອງການເລືອກຕັ້ງສະພາສູງ ເມື່ອວັນອັງຄານທີ 4 ມີນາຜ່ານມາ.

ຜົນການເລືອກຕັ້ງສະແດງໃຫ້ເຫັນວ່າ ຂະບວນການກອບກູ້ຊາດ ເຊິ່ງເປັນພັກລັດຖະບານ ໄດ້ຮັບໄຊຊະນະຢ່າງຖ້ວມລົ້ນໃນການເລືອກຕັ້ງສະພາສູງ ໂດຍໄດ້ 43 ຈາກ 46 ທີ່ນັ່ງ.

ການປ່ຽນແປງທາງການເມືອງໄດ້ເລີ່ມຂຶ້ນໃນຊາດໃນປີ 2021 ຫຼັງຈາກ ມະຫາມັດ ເດບີ ອະດີດນາຍພົນທະຫານ ໄດ້ຂຶ້ນກຳອຳນາດພາຍຫຼັງບິດາຂອງເຂົາ ອິດຣິສ ເດບີ ອິດໂນ ເສຍຊີວິດ; ນັບແຕ່ນັ້ນມາ, ປະເທດອາຟຣິກາກາງແຫ່ງນີ້ ໄດ້ຈັດການເລືອກຕັ້ງຫຼາຍຄັ້ງ ເພື່ອຮັບປະກັນການກັບຄືນສູ່ການປົກຄອງແບບປະຊາທິປະໄຕໂດຍສັນຕິ.

ປະທານາທິບໍດີ ມະຫາມັດ ເດບີ ກ່າວວ່າ "ມີການຈັດການເລືອກຕັ້ງໃຫຍ່ 6 ຄັ້ງ ໄດ້ແກ່: ການລົງປະຊາມະຕິ, ການເລືອກຕັ້ງປະທານາທິບໍດີ, ການເລືອກຕັ້ງສະພານິຕິບັນຍັດ, ການເລືອກຕັ້ງຂັ້ນແຂວງ, ການເລືອກຕັ້ງຂັ້ນເທດສະບານ ແລະ ການເລືອກຕັ້ງສະພາສູງ, ຈຶ່ງເປັນສິ່ງຢັ້ງຢືນເຖິງພະລັງປະຊາທິປະໄຕໃນປະເທດຂອງພວກເຮົາ ແລະ ຂໍຂອບໃຈປະຊາຊົນຊາດທີ່ເລືອກຕົວແທນຂອງຕົນໃນທຸກລະດັບຢ່າງເສລີ".

ລັດຖະດຳລັດທີ່ປະກາດໃນຕອນແລງຂອງວັນດຽວກັນ, ທ່ານ ມະຫາມັດ ເດບີ ໄດ້ແຕ່ງຕັ້ງສະມາຊິກສະພາສູງ 23 ຄົນ, ນອກຈາກ 46 ຄົນ ທີ່ໄດ້ຮັບການເລືອກຕັ້ງເມື່ອວັນທີ 25 ກຸມພາຜ່ານມາ ເພື່ອສ້າງຕັ້ງສະພາສູງຊຸດທຳອິດຂອງປະເທດ.

ໃນວັນສຸກທີ 7 ມີນາ, ອະດີດນາຍົກລັດຖະມົນຕີຮາຣູນ ກາບາດີ (Haroun Kabadi) ໄດ້ຮັບເລືອກເປັນປະທານສະພາສູງຄົນໃໝ່ຂອງປະເທດ; ກາບາດີ ໄດ້ຮັບເລືອກໂດຍການສົ່ງສຽງສະແດງຄວາມຍິນດີໃນກອງປະຊຸມຄັ້ງປະຖົມມະລືກຂອງສະພາສູງ ຊຸດທີ I ເນື່ອງຈາກບໍ່ມີໃຜຄັດຄ້ານການສະເໜີຊື່ຂອງເຂົາ.

ກາບາດີ ກ່າວຫຼັງຈາກໄດ້ຮັບເລືອກ "ມື້ນີ້, ຂ້າພະເຈົ້າກຳລັງຫວນຄິດເຖິງປະສົບການເມື່ອ 14 ປີກ່ອນ ຕອນທີ່ໄດ້ຮັບເລືອກຕັ້ງເປັນປະທານສະພາແຫ່ງຊາດ (ສະພາຕ່ຳ), ຂ້າພະເຈົ້າຮູ້ສຶກຊາບຊຶ້ງໃຈຫຼາຍ; ນີ້ເປັນມື້ທີ່ຍິ່ງໃຫຍ່ສຳລັບປະເທດ, ສຳລັບປະຊາຊົນ ແລະ ສຳລັບພວກເຮົາທັງໝົດ-ເປັນຊ່ວງເວລາປະຫວັດສາດ ແລະ ໜ້າຈົດຈຳ." ປະທານສະພາສູງຄົນໃໝ່ກ່າວຕື່ມວ່າ: ພວກເຮົາກຳລັງເຂົ້າສູ່ປະຫວັດສາດໃນຖານະເປັນສະມາຊິກສະພາສູງຄົນທຳອິດຂອງຊາດທີ່ເປັນເອກະລາດ.

ສື່ມວນຊົນທ້ອງຖິ່ນລາຍງານວ່າ, ປັດຈຸບັນ ຊາດ ພວມສຸມໃສ່ບັນດາໂຄງການພັດທະນາ ພາຍຫຼັງປະຕິທິນເລືອກຕັ້ງທີ່ຍາວນານ.

# ຊີຣີ ສ້າງຕັ້ງຄະນະກຳມະການຮ່າງລັດຖະທຳມະນູນ ເພື່ອແກ້ໄຂຄວາມເປົ່າຫວ່າງທາງກົດໝາຍ

(Xinhua) - ທ່ານ ອາເໝັດ ອັລ-ຊາຣາ ປະທານາທິບໍດີຮັກສາການຂອງຊີຣີ ປະກາດເມື່ອວັນອາທິດທີ 2 ມີນາຜ່ານມາວ່າ ໄດ້ສ້າງຕັ້ງຄະນະກຳມະການ ທີ່ມີສະມາຊິກ 7 ຄົນ ໂດຍມີໜ້າທີ່ຮ່າງຖະແຫຼງການລັດຖະທຳມະນູນ (constitutional declaration), ສື່ມວນຊົນທ້ອງຖິ່ນ Syria TV ລາຍງານ.



ຄະນະກຳມະການດັ່ງກ່າວປະກອບດ້ວຍ: 1. ອັບດຸລຮາມິດ ອັລ-ອາວັກ ຜູ້ຊ່ຽວຊານດ້ານກົດໝາຍລັດຖະທຳມະນູນ, 2. ຢັສເຊີ ອັລ-ຮູວາອິຊ ສາດສະດາຈານດ້ານກົດໝາຍສາກົນ, 3. ອິສມາອິລ ອັລ-ຄາລຟານ ຜູ້ຊ່ຽວຊານດ້ານກົດໝາຍແພ່ງ, 4. ຣາຢັນ ກາຣິລັນ ຫົວໜ້າພາກວິຊາກົດໝາຍມະຫາຊົນຂອງມະຫາວິທະຍາໄລດາມັສກັສ, 5. ໂມຮຳໝັດ ເຣດາ ຈາລາຄີ ນັກລັດຖະສາດ ແລະ ຜູ້ບໍລິຫານ, 6. ອາໝັດຄໍຣ໌ບີນັກຄົ້ນຄວ້າກົດໝາຍ, 7. ບາເອຍ ມາຣ໌ດີນີ ນັກຂ່າວ ແລະ ຜູ້ສະໜັບສະໜຸນສິດທິມະນຸດ.

ຄະນະກຳມະການໄດ້ຮັບການຄັດເລືອກໂດຍອີງໃສ່ໃບຢັ້ງຢືນທາງວິຊາການແລະວິຊາຊີບຂອງພວກເຂົາ ລວມເຖິງບົດບາດທີ່ຜ່ານມາຂອງພວກເຂົາໃນການປຶກສາຫາລືທາງດ້ານກົດໝາຍ ແລະລັດຖະທຳມະນູນ, ລາຍງານລະບຸເພີ່ມວ່າ ຄະນະກຳມະການດັ່ງກ່າວ ມີເປົ້າໝາຍທີ່ຈະເຊື່ອມຊ່ອງຫວ່າງລັດຖະທຳມະນູນ ພາຍຫຼັງການລົ້ມສະຫຼາຍຂອງລະບອບການປົກຄອງຂອງ ບາຊາຣ໌ ອັລ-ອັສຊາດ ໃນເດືອນທັນວາ2024.

## ເກົ່າໄວ້ ໄດ້ບົດຮຽນ

# ສະໜາມຮົບຕ້ານການສໍ້ລາດບັງຫຼວງຂອງບາງປະເທດ

❖ ວິເສດ ສະແຫວງສຶກສາ

ໜັງສືພິມ **“ຜູ້ແທນປະຊາຊົນ”** ສະບັບນີ້ ຂໍຂຸດໄຈ້ແຍກບົດຮຽນຂອງບາງປະເທດໃນສະໜາມຮົບຕ້ານໄພສໍ້ລາດບັງຫຼວງ. ເປັນຂ່າວອ່າວເກົ່າແຕ່ບົດຮຽນອາດຍັງໃໝ່ອ່ຽມສຳລັບຄວາມພະຍາຍາມຂອງບ້ານເຮົາໃນການຕໍ່ສູ້ຕ້ານພະຍາດສໍ້ລາດບັງຫຼວງທີ່ຊຳເຮື້ອມາເປັນເວລາຫຼາຍຝ້າຫຼ້າປີແລ້ວ.

ຢູ່ປະເທດບຸນກາລີ ມາດຕະການຈິງຈັງຕັ້ງໜ້າ ເພື່ອຈຳກັດ ແລະ ກ້າວໄປສູ່ຂັ້ນກຳຈັດພະຍາດສໍ້ລາດບັງຫຼວງ ໄດ້ເລີ່ມຂຶ້ນໃນຕົ້ນປີ 2015 (ໜັງສືພິມວຽງຈັນທາມ ວັນທີ 10 ເມສາ 2015) ໂດຍທາງລັດຖະບານຂອງປະເທດນີ້ ໄດ້ຮັບຮອງເອົາແຜນການຕ້ານການສໍ້ລາດບັງຫຼວງສຳລັບ 5 ປີ ຊຸດທຳອິດ, ແຜນດັ່ງກ່າວໄດ້ກຳນົດ 33 ມາດຕະການ ເພື່ອແກ້ໄຂບັນຫາສໍ້ລາດບັງຫຼວງໃນ 6 ຂົງເຂດຕົ້ນຕໍ ໂດຍເລັ່ງໃສ່ບັນດາພະນັກງານໃນທຸກໆລະດັບ ແຕ່ເນັ້ນບັນດາໂຕໃຫຍ່ໆ (ຂັ້ນສູງສຸດ). ວຽກທີ່ເປັນເປົ້າໝາຍຕົ້ນຕໍຂອງສະໜາມຮົບດັ່ງກ່າວແມ່ນ: ສ້າງຕັ້ງລະບົບຕ້ານການສໍ້ລາດບັງຫຼວງທີ່ມີປະສິດທິພາບ, ປາບປາມການສໍ້ລາດບັງຫຼວງໃນຂົງເຂດການເມືອງ, ປ້ອງກັນບໍ່ໃຫ້ມີພະຍາດສໍ້ລາດບັງຫຼວງໃນຂົງເຂດຍຸຕິທຳ, ໃນກະຊວງພາຍໃນ ແລະ ໃນບັນດາໜ່ວຍງານຕິດຕາມກວດກາ, ແກ້ໄຂການສໍ້ລາດບັງຫຼວງລະດັບຕ່ຳທີ່ເກີດຂຶ້ນໃນຊີວິດປະຈຳວັນ ແລະ ສຸດທ້າຍແມ່ນການສ້າງສະພາບແວດລ້ອມທີ່ກໍ່ໃຫ້ເກີດມີການສໍ້ລາດບັງຫຼວງ; ສະໜາມຮົບຕ້ານການສໍ້ລາດບັງຫຼວງຂອງປະເທດບຸນກາລີ ນັ້ນ ເນັ້ນການປະສານງານຢ່າງກົມກຽວລະຫວ່າງໜ່ວຍງານຮັບຜິດຊອບປະຕິບັດກົດໝາຍ ແລະ ການສ້າງຕັ້ງໜ່ວຍງານພຽງໜ່ວຍດຽວທີ່ມີສິດເດັດຂາດໃນການສອບສວນ, ໄຈ້ແຍກວັດຖຸຊັບສິນທີ່ພະນັກງານຂັ້ນສູງໄດ້ມາຄອບຄອງດ້ວຍການສໍ້ໂກງ. ທາງການປະເທດບຸນກາລີ ມີຄວາມເຊື່ອໝັ້ນວ່າ ແຜນການ 5 ປີ ເພື່ອຕ້ານການສໍ້ລາດບັງຫຼວງ ຈະຊ່ວຍໃຫ້ປະເທດສາມາດແກ້ໄຂປາກົດການຫຍໍ້ທໍ້ນີ້ໄດ້ໃນລະດັບດຽວກັບຫຼາຍປະເທດສະມາຊິກສະຫະພາບເອີຣົບ (ອີຢູ EU).

ອີງຕາມກົດໝາຍການສໍ້ລາດບັງຫຼວງສະບັບປີ 2018, ການໃຫ້ສິນບົນມີໂທດຕິດຄຸກສູງສຸດ 7 ປີ ຫຼື ໄດ້ຮັບໂທດປັບໃໝ ຫຼື ໄດ້ຮັບໂທດທັງສອງຢ່າງ.

ສ່ວນເລື່ອງທີສອງສຸດທ້າຍໃນບົດນີ້ແມ່ນຂ່າວຈາກໜັງສືພິມ “ຜູ້ແທນປະຊາຊົນ” ໃນສະບັບວັນທີ 7-9 ທັນວາ 2015 ໃສ່ຫົວຂໍ້ວ່າ “ໂທດສຸດຈະລິດ ອາດບໍ່ຖືກປະຫານຊີວິດ ຫາກສົ່ງຄືນຊັບສິນທີ່ສໍ້ໂກງ” ລາຍລະອຽດຂອງຂ່າວບອກວ່າ ໃນວັນທີ 20 ຕຸລາ 2015 ກອງປະຊຸມສະພາແຫ່ງຊາດຫວຽດນາມ ໄດ້ຮັບຮອງເອົາກົດໝາຍອາຍາສະບັບປັບປຸງ ທີ່ກຳນົດຫຼຸດໂທດປະຫານຊີວິດ ຖ້າສາມາດຄືນຢ່າງໜ້ອຍ 3/4 ຫຼື 75% ຂອງຊັບສິນທີ່ສໍ້ໂກງ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ມີມະຕິຍົກເລີກໂທດປະຫານຊີວິດ ສຳລັບຜູ້ກະທຳຜິດໃນ 7 ຄະດີ ຄື: ການປຸ້ນຈີ້ຊີງຊັບ; ການຈຳໜ່າຍສິນຄ້າປອມແປງ ເຊັ່ນ: ສະບຽງອາຫານ-ອາຫານປົນເປື້ອນ; ການຄອບຄອງຢາເສບຕິດທີ່ຜິດກົດໝາຍ; ການຍຶດເອົາຢາເສບຕິດ; ການທຳລາຍອາຄານ, ໂຄງການກໍ່ສ້າງ, ພາຫະນະທີ່ມີຄວາມສຳຄັນຕໍ່ຄວາມໝັ້ນຄົງຂອງຊາດ; ການຝ່າຝືນຄຳສັ່ງຂອງຜູ້ບັງຄັບບັນຊາ ແລະ ຂໍ້ທີ 7 ແມ່ນການຍອມຈຳນົນຕໍ່ສັດຕູ. ເຊັ່ນດຽວກັບຢູ່ໃນປະເທດຕ່າງໆ ເຊິ່ງໂດຍທົ່ວໄປແລ້ວບຸກຄົນທີ່ມີຄວາມຮັບຜິດຊອບທາງອາຍານັ້ນ ຕ້ອງເປັນຜູ້ທີ່ຢູ່ໃນເກນອາຍຸຜູ້ໃຫຍ່ ຫຼື ບັນລຸນິຕິພາວະ 18 ປີຂຶ້ນໄປ. ແຕ່ຢູ່ຫວຽດນາມນັ້ນ ໄດ້ມີການປັບຫຼຸດອາຍຸຂອງບຸກຄົນທີ່ມີຄວາມຮັບຜິດຊອບທາງອາຍາລົງເປັນແຕ່ 14-16 ປີ ໃນອາຊະຍາກຳດັ່ງຕໍ່ໄປນີ້: ຂົ່ມຂືນບຸກຄົນທີ່ມີອາຍຸຕ່ຳກວ່າ 16 ປີ, ການຮ່ວມເພດໂດຍການບັງຄັບກັບບຸກຄົນອາຍຸແຕ່ 13 ຫາ ຕ່ຳກວ່າ 16 ປີ, ການຄ້າມະນຸດ ບຸກຄົນທີ່ມີອາຍຸ 16 ປີ ແລະ ອາຊະຍາກຳແຂ່ງລົດທີ່ຜິດກົດໝາຍ. ກົດໝາຍອາຍາສະບັບປັບປຸງນີ້ ມີຜົນບັງຄັບໃຊ້ແຕ່ວັນທີ 1 ກໍລະກົດ 2016 ເປັນຕົ້ນມາ.

ທະນາຄານພັດທະນາລາວ
LDB Bank




## ບວກເອົາເອງ

\# ບ່າວກະບື

ໃນຮ້ານເຄື່ອງດື່ມ, ຍິງຄົນໜຶ່ງຖາມນັກຄະນິດສາດວ່າ:

“ອ້າຍຄິດວ່າອາຍຸນ້ອງໄດ້ຈັກປີແລ້ວ?” ນາງຖາມຊື່ອາຍໆ ແບບດັດຈະລິດ.

“18 ປີ ຖ້າເບິ່ງຈາກຄວາມຮ້ອນແຮງໃນຕາຂອງນ້ອງ, 19 ປີ ຖ້າເບິ່ງສີແດງເຣື່ອໃນພວງແກ້ມ ແລະ 20 ປີ ຖ້າເບິ່ງແອວອາວທີ່ຈັບຢູ່ໃນໜ້າຂອງນ້ອງ, ສ່ວນເລື່ອງຈະບວກອອກເປັນເທົ່າໃດນັ້ນ ອ້າຍຄິດວ່ານ້ອງຄົງເຮັດເອງໄດ້.”

## Add For Yourself

\# BAOKBU

A woman in a bar asks a mathematician

“How old, do you think, am I? she asks coyly”

“Well-18 by that fire in your eyes, 19 by that glow on you cheeks, 20 by that radiance of you face, and adding that up is something you can probably do for yourself...”

## ຄາມພາສາ ກາຕູນ




● ໂດຍ : ພູຜາ

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ ຫົວໜ້າ ບກ
ທ່ານ ວິລະພັດ ພານວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສລີວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ